ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ກົດໝາຍ
# ວ່າດ້ວຍ ການທ່ອງທ່ຽວ
# (ສະບັບປັບປຸງ)

2024

## ສາລະບານ

**ເນື້ອໃນ** **ໜ້າ**

**ພາກທີ I ບົດບັນຍັດທົ່ວໄປ** ........ 1
ມາດຕາ 1 (ປັບປຸງ) ຈຸດປະສົງ ........ 1
ມາດຕາ 2 (ປັບປຸງ) ການທ່ອງທ່ຽວ ........ 1
ມາດຕາ 3 (ປັບປຸງ) ການອະທິບາຍຄໍາສັບ ........ 1
ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານທ່ອງທ່ຽວ ........ 4
ມາດຕາ 5 (ປັບປຸງ) ຫຼັກການເຄື່ອນໄຫວວຽກງານທ່ອງທ່ຽວ ........ 4
ມາດຕາ 6 (ປັບປຸງ) ພັນທະຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ........ 4
ມາດຕາ 7 (ປັບປຸງ) ຂອບເຂດການນໍາໃຊ້ກົດໝາຍ ........ 5
ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ ........ 5
**ພາກທີ II ຊັບພະຍາກອນທ່ອງທ່ຽວ** ........ 5
**ໝວດທີ 1 ຊັບພະຍາກອນທ່ອງທ່ຽວ** ........ 5
ມາດຕາ 9 (ປັບປຸງ) ຊັບພະຍາກອນທ່ອງທ່ຽວ ........ 5
ມາດຕາ 10 ປະເພດຊັບພະຍາກອນທ່ອງທ່ຽວ ........ 5
ມາດຕາ 11 (ປັບປຸງ) ຊັບພະຍາກອນທ່ອງທ່ຽວຕາມທໍາມະຊາດ ........ 5
ມາດຕາ 12 (ປັບປຸງ) ຊັບພະຍາກອນທ່ອງທ່ຽວທີ່ມະນຸດສ້າງຂຶ້ນ ........ 5
**ໝວດທີ 2 ແຫຼ່ງທ່ອງທ່ຽວ** ........ 6
ມາດຕາ 13 (ໃໝ່) ແຫຼ່ງທ່ອງທ່ຽວ ........ 6
ມາດຕາ 14 (ປັບປຸງ) ການສໍາຫຼວດ ແລະ ຂຶ້ນທະບຽນແຫຼ່ງທ່ອງທ່ຽວ ........ 6
ມາດຕາ 15 ການຈັດລະດັບແຫຼ່ງທ່ອງທ່ຽວ ........ 6
ມາດຕາ 16 (ປັບປຸງ) ແຫຼ່ງທ່ອງທ່ຽວລະດັບຊາດ ........ 6
ມາດຕາ 17 (ປັບປຸງ) ແຫຼ່ງທ່ອງທ່ຽວລະດັບທ້ອງຖິ່ນ ........ 6
**ໝວດທີ 3 ສະຖານທີ່ທ່ອງທ່ຽວ** ........ 7
ມາດຕາ 18 (ໃໝ່) ສະຖານທີ່ທ່ອງທ່ຽວ ........ 7
ມາດຕາ 19 (ໃໝ່) ປະເພດສະຖານທີ່ທ່ອງທ່ຽວ ........ 7
ມາດຕາ 20 (ໃໝ່) ສະຖານທີ່ທ່ອງທ່ຽວທໍາມະຊາດ ........ 7
ມາດຕາ 21 (ໃໝ່) ສະຖານທີ່ທ່ອງທ່ຽວວັດທະນະທໍາ ........ 7
ມາດຕາ 22 (ໃໝ່) ສະຖານທີ່ທ່ອງທ່ຽວປະຫວັດສາດ ........ 7
ມາດຕາ 23 (ໃໝ່) ມາດຕະຖານສະຖານທີ່ທ່ອງທ່ຽວ ........ 7
ມາດຕາ 24 (ໃໝ່) ລະດັບສະຖານທີ່ທ່ອງທ່ຽວ ........ 8
**ພາກທີ III ກິດຈະການ ການທ່ອງທ່ຽວ** ........ 8
**ໝວດທີ 1 ການໂຄສະນາການທ່ອງທ່ຽວ** ........ 8
ມາດຕາ 25 (ປັບປຸງ) ການໂຄສະນາການທ່ອງທ່ຽວ ........ 8
ມາດຕາ 26 ເນື້ອໃນການໂຄສະນາ ........ 8
ມາດຕາ 27 (ປັບປຸງ) ຮູບການ ແລະ ວິທີການ ການໂຄສະນາ ........ 8
**ໝວດທີ 2 ການສື່ສານການທ່ອງທ່ຽວ** ........ 9
ມາດຕາ 28 (ປັບປຸງ) ການສື່ສານການທ່ອງທ່ຽວ ........ 9

ມາດຕາ 29 (ປັບປຸງ) ການສະໜອງ ຂໍ້ມູນ ຂ່າວສານ ການທ່ອງທ່ຽວ .......... 9
ມາດຕາ 30 (ປັບປຸງ) ການແນະນຳເຕືອນໄພການທ່ອງທ່ຽວ .......... 9
**ໝວດທີ 3 ການບໍລິການຂົນສົ່ງນັກທ່ອງທ່ຽວ** .......... 9
ມາດຕາ 31 (ປັບປຸງ) ການບໍລິການຂົນສົ່ງນັກທ່ອງທ່ຽວ .......... 9
ມາດຕາ 32 (ປັບປຸງ) ຍານພາຫະນະບໍລິການຂົນສົ່ງນັກທ່ອງທ່ຽວ .......... 10
ມາດຕາ 33 (ປັບປຸງ) ມາດຕະຖານຍານພາຫະນະບໍລິການຂົນສົ່ງນັກທ່ອງທ່ຽວ .......... 10
**ໝວດທີ 4 ສະຖານທີ່ພັກແຮມ** .......... 10
ມາດຕາ 34 (ປັບປຸງ) ສະຖານທີ່ພັກແຮມ .......... 10
ມາດຕາ 35 (ໃໝ່) ປະເພດສະຖານທີ່ພັກແຮມ .......... 10
ມາດຕາ 36 (ໃໝ່) ມາດຕະຖານສະຖານທີ່ພັກແຮມ .......... 11
ມາດຕາ 37 (ປັບປຸງ) ລະດັບສະຖານທີ່ພັກແຮມ .......... 11
ມາດຕາ 38 (ປັບປຸງ) ການບໍລິການສະຖານທີ່ພັກແຮມ .......... 11
ມາດຕາ 39 (ປັບປຸງ) ການກຳນົດຄ່າພັກແຮມ .......... 11
**ໝວດທີ 5 ຮ້ານອາຫານ** .......... 11
ມາດຕາ 40 (ໃໝ່) ຮ້ານອາຫານ .......... 11
ມາດຕາ 41 (ໃໝ່) ປະເພດຮ້ານອາຫານ .......... 12
ມາດຕາ 42 (ໃໝ່) ມາດຕະຖານຮ້ານອາຫານ .......... 12
ມາດຕາ 43 (ປັບປຸງ) ລະດັບຮ້ານອາຫານ .......... 12
ມາດຕາ 44 (ປັບປຸງ) ການບໍລິການອາຫານ .......... 12
ມາດຕາ 45 (ປັບປຸງ) ການກຳນົດຄ່າອາຫານ .......... 12
**ໝວດທີ 6 ການບັນເທີງ** .......... 13
ມາດຕາ 46 (ປັບປຸງ) ການບັນເທີງ .......... 13
ມາດຕາ 47 (ປັບປຸງ) ປະເພດການບໍລິການບັນເທີງ .......... 13
ມາດຕາ 48 (ປັບປຸງ) ສະຖານທີ່ບັນເທີງ .......... 13
ມາດຕາ 49 (ປັບປຸງ) ການບໍລິການບັນເທີງ .......... 13
ມາດຕາ 50 (ໃໝ່) ມາດຕະຖານການບໍລິການບັນເທີງ .......... 14
ມາດຕາ 51 (ປັບປຸງ) ລະດັບການບໍລິການບັນເທີງ .......... 14
**ໝວດທີ 7 ການສົ່ງເສີມສຸຂະພາບ** .......... 14
ມາດຕາ 52 ການສົ່ງເສີມສຸຂະພາບ .......... 14
ມາດຕາ 53 (ປັບປຸງ) ການບໍລິການສົ່ງເສີມສຸຂະພາບ .......... 14
**ໝວດທີ 8 ເຄື່ອງທີ່ລະນຶກ** .......... 14
ມາດຕາ 54 (ປັບປຸງ) ເຄື່ອງທີ່ລະນຶກ .......... 14
ມາດຕາ 55 (ປັບປຸງ) ປະເພດເຄື່ອງທີ່ລະນຶກ .......... 14
ມາດຕາ 56 (ປັບປຸງ) ສະຖານທີ່ ຈັດວາງ ແລະ ຂາຍ ເຄື່ອງທີ່ລະນຶກ .......... 15
**ໝວດທີ 9 ຄວາມປອດໄພ** .......... 15
ມາດຕາ 57 (ປັບປຸງ) ຄວາມປອດໄພ .......... 15
ມາດຕາ 58 (ປັບປຸງ) ຕຳຫຼວດຄຸ້ມຄອງການທ່ອງທ່ຽວ .......... 15

ມາດຕາ 59 (ໃໝ່) ການຊ່ວຍເຫຼືອສຸກເສີນ ....................................................................15
ມາດຕາ 60 (ປັບປຸງ) ການປະກັນໄພ....................................................................15
**ໝວດທີ 10 ການບໍລິການນຳທ່ຽວ** ....................................................................16
ມາດຕາ 61 (ໃໝ່) ຮູບແບບການບໍລິການນຳທ່ຽວ ....................................................................16
ມາດຕາ 62 ປະເພດການບໍລິການນຳທ່ຽວ....................................................................16
ມາດຕາ 63 ການບໍລິການນຳທ່ຽວລະຫວ່າງປະເທດ ....................................................................16
ມາດຕາ 64 ການບໍລິການນຳທ່ຽວພາຍໃນປະເທດ ....................................................................16
ມາດຕາ 65 ການບໍລິການນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ ....................................................................16
ມາດຕາ 66 (ປັບປຸງ) ການຈັດການບໍລິການນຳທ່ຽວ ....................................................................16
ມາດຕາ 67 (ປັບປຸງ) ການກຳນົດຄ່າບໍລິການນຳທ່ຽວ ....................................................................17
**ໝວດທີ 11 ພະນັກງານນຳທ່ຽວ** ....................................................................17
ມາດຕາ 68 (ໃໝ່) ພະນັກງານນຳທ່ຽວ ....................................................................17
ມາດຕາ 69 (ປັບປຸງ) ປະເພດພະນັກງານນຳທ່ຽວ ....................................................................17
ມາດຕາ 70 (ປັບປຸງ) ລະດັບພະນັກງານນຳທ່ຽວ ....................................................................17
ມາດຕາ 71 (ໃໝ່) ພະນັກງານນຳທ່ຽວລະດັບຊາດ ....................................................................17
ມາດຕາ 72 (ໃໝ່) ພະນັກງານນຳທ່ຽວລະດັບແຂວງ ....................................................................17
ມາດຕາ 73 (ໃໝ່) ພະນັກງານນຳທ່ຽວລະດັບພື້ນທີ່ສະເພາະໃດໜຶ່ງ ....................................................................18
ມາດຕາ 74 (ປັບປຸງ) ມາດຕະຖານ ແລະ ເງື່ອນໄຂຂອງພະນັກງານນຳທ່ຽວ ....................................................................18
ມາດຕາ 75 (ໃໝ່) ສິດຂອງພະນັກງານນຳທ່ຽວ ....................................................................18
ມາດຕາ 76 (ໃໝ່) ພັນທະຂອງພະນັກງານນຳທ່ຽວ ....................................................................19
**ໝວດທີ 12 ຜູ້ນຳພາຄະນະນັກທ່ອງທ່ຽວ** ....................................................................19
ມາດຕາ 77 (ໃໝ່) ຜູ້ນຳພາຄະນະນັກທ່ອງທ່ຽວ ....................................................................19
ມາດຕາ 78 (ໃໝ່) ສິດ ຂອງຜູ້ນຳພາຄະນະນັກທ່ອງທ່ຽວ ....................................................................19
ມາດຕາ 79 (ໃໝ່) ພັນທະ ຂອງຜູ້ນຳພາຄະນະນັກທ່ອງທ່ຽວ ....................................................................20
**ພາກທີ IV ນັກທ່ອງທ່ຽວ ແລະ ການເຂົ້າ-ອອກ ສປປ ລາວ** ....................................................................20
**ໝວດທີ 1 ນັກທ່ອງທ່ຽວ** ....................................................................20
ມາດຕາ 80 (ໃໝ່) ນັກທ່ອງທ່ຽວ ....................................................................20
ມາດຕາ 81 (ປັບປຸງ) ປະເພດນັກທ່ອງທ່ຽວ....................................................................20
ມາດຕາ 82 ນັກທ່ອງທ່ຽວພາຍໃນ ....................................................................21
ມາດຕາ 83 (ປັບປຸງ) ນັກທ່ອງທ່ຽວຕ່າງປະເທດ ....................................................................21
ມາດຕາ 84 (ປັບປຸງ) ສິດຂອງນັກທ່ອງທ່ຽວ ....................................................................21
ມາດຕາ 85 (ປັບປຸງ) ພັນທະຂອງນັກທ່ອງທ່ຽວ ....................................................................21
**ໝວດທີ 2 ການເຂົ້າ-ອອກ ສປປ ລາວ ຂອງນັກທ່ອງທ່ຽວ** ....................................................................22
ມາດຕາ 86 (ປັບປຸງ) ການອະນຸຍາດເຂົ້າ-ອອກ ສປປ ລາວ ....................................................................22
ມາດຕາ 87 (ປັບປຸງ) ດ່ານເຂົ້າ-ອອກ ສປປ ລາວ ....................................................................22
ມາດຕາ 88 ການເດີນທາງພາຍໃນປະເທດ ....................................................................22
**ພາກທີ V ການພັດທະນາການທ່ອງທ່ຽວ**....................................................................22

**ໝວດທີ 1 ແຜນພັດທະນາການທ່ອງທ່ຽວ**......22
ມາດຕາ 89 (ປັບປຸງ) ລະດັບແຜນພັດທະນາການທ່ອງທ່ຽວ......22
ມາດຕາ 90 (ປັບປຸງ) ຫຼັກການການສ້າງແຜນພັດທະນາການທ່ອງທ່ຽວ ......23
ມາດຕາ 91 (ປັບປຸງ) ເນື້ອໃນແຜນພັດທະນາການທ່ອງທ່ຽວ ......23
**ໝວດທີ 2 ການພັດທະນາແຫຼ່ງທ່ອງທ່ຽວ**......23
ມາດຕາ 92 (ໃໝ່) ການພັດທະນາແຫຼ່ງທ່ອງທ່ຽວ ......23
ມາດຕາ 93 (ປັບປຸງ) ຂັ້ນຕອນການພັດທະນາແຫຼ່ງທ່ອງທ່ຽວ......23
**ໝວດທີ 3 ເມືອງທ່ອງທ່ຽວ** ......24
ມາດຕາ 94 (ປັບປຸງ) ເງື່ອນໄຂເປັນເມືອງທ່ອງທ່ຽວ......24
ມາດຕາ 95 ການພັດທະນາເມືອງທ່ອງທ່ຽວ ......24
ມາດຕາ 96 ການຄຸ້ມຄອງເມືອງທ່ອງທ່ຽວ ......24
**ພາກທີ VI ກອງທຶນການທ່ອງທ່ຽວ**......24
ມາດຕາ 97 (ປັບປຸງ) ກອງທຶນການທ່ອງທ່ຽວ......24
ມາດຕາ 98 (ປັບປຸງ) ແຫຼ່ງກອງທຶນການທ່ອງທ່ຽວ ......24
ມາດຕາ 99 (ປັບປຸງ) ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນການທ່ອງທ່ຽວ......25
**ພາກທີ VII ທຸລະກິດການທ່ອງທ່ຽວ**......25
ມາດຕາ 100 (ໃໝ່) ການຂໍອະນຸຍາດດຳເນີນທຸລະກິດການທ່ອງທ່ຽວ ......25
ມາດຕາ 101 (ປັບປຸງ) ທຸລະກິດການທ່ອງທ່ຽວ......25
ມາດຕາ 102 (ໃໝ່) ເງື່ອນໄຂການຂໍດຳເນີນທຸລະກິດ......26
ມາດຕາ 103 (ໃໝ່) ເອກະສານປະກອບການຂໍດຳເນີນທຸລະກິດ......26
ມາດຕາ 104 (ໃໝ່) ການພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ......26
ມາດຕາ 105 (ໃໝ່) ໃບອະນຸຍາດດຳເນີນທຸລະກິດ ......26
ມາດຕາ 106 (ປັບປຸງ) ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ ......27
ມາດຕາ 107 (ໃໝ່) ການໂຈະການດຳເນີນທຸລະກິດ......27
ມາດຕາ 108 (ໃໝ່) ການຖອນໃບອະນຸຍາດດຳເນີນທຸລະກິດ......27
ມາດຕາ 109 (ໃໝ່) ກິດຈະການ ແລະ ວິຊາຊີບ ທີ່ສະຫງວນ......27
**ພາກທີ VIII ສະມາຄົມທຸລະກິດການທ່ອງທ່ຽວ ແລະ ສະພາສົ່ງເສີມຕະຫຼາດການທ່ອງທ່ຽວລາວ**......28
ມາດຕາ 110 (ປັບປຸງ) ສະມາຄົມທຸລະກິດການທ່ອງທ່ຽວ ......28
ມາດຕາ 111 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະມາຄົມທຸລະກິດການທ່ອງທ່ຽວ ......28
ມາດຕາ 112 (ໃໝ່) ສະພາສົ່ງເສີມຕະຫຼາດການທ່ອງທ່ຽວລາວ......28
**ພາກທີ IX ຂໍ້ຫ້າມ**......29
ມາດຕາ 113 (ປັບປຸງ) ຂໍ້ຫ້າມທົ່ວໄປ......29
ມາດຕາ 114 (ໃໝ່) ຂໍ້ຫ້າມສຳລັບນັກທ່ອງທ່ຽວ......29
ມາດຕາ 115 (ປັບປຸງ) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດການທ່ອງທ່ຽວ ......29
ມາດຕາ 116 (ໃໝ່) ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ......30
**ພາກທີ X ການຄຸ້ມຄອງ ແລະ ການກວດກາ ວຽກງານທ່ອງທ່ຽວ** ......30

**ໝວດທີ 1 ການຄຸ້ມຄອງວຽກງານທ່ອງທ່ຽວ** ....................................................30
ມາດຕາ 117 ອົງການຄຸ້ມຄອງວຽກງານທ່ອງທ່ຽວ..........................................................30
ມາດຕາ 118 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ...........30
ມາດຕາ 119 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ....................................................................................31
ມາດຕາ 120 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ ນະຄອນ ....................................................................................32
ມາດຕາ 121 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ........................................................32
ມາດຕາ 122 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ...........................................................................................32
**ໝວດທີ 2 ການກວດກາວຽກງານທ່ອງທ່ຽວ**.......................................................33
ມາດຕາ 123 (ປັບປຸງ) ອົງການກວດກາວຽກງານທ່ອງທ່ຽວ ......................................................33
ມາດຕາ 124 (ປັບປຸງ) ເນື້ອໃນການກວດກາ ....................................................................33
ມາດຕາ 125 (ປັບປຸງ) ຮູບການການກວດກາ ....................................................................33
**ພາກທີ XI ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**....................34
ມາດຕາ 126 ນະໂຍບາຍຕໍ່ຜູ້ມີຜົນງານ ...........................................................................34
ມາດຕາ 127 ມາດຕະການຕໍ່ຜູ້ລະເມີດ ...........................................................................34
**ພາກທີ XII ບົດບັນຍັດສຸດທ້າຍ** ...............................................................................34
ມາດຕາ 128 ການຈັດຕັ້ງປະຕິບັດ.................................................................................34
ມາດຕາ 129 ຜົນສັກສິດ.........................................................................................34

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ......125...../ປປທ

ນະຄອນຫຼວງວຽງຈັນ, ວັນທີ....12 ສິງຫາ 2024...

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 131/ສພຊ, ລົງວັນທີ 01 ກໍລະກົດ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 25/ຄປຈ, ລົງວັນທີ 29 ກໍລະກົດ 2024.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 131 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 01 / 07 / 24

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມຕອນເຊົ້າຂອງວັນທີ 27 ມິຖຸນາ 2024 ແລະ ຖືກພິຈາລະນາຮັບຮອງເອົາວາລະຕອນເຊົ້າຂອງວັນທີ 1 ກໍລະກົດ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ | ເລກທີ 63 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 1 ກໍລະກົດ 2024

# ກົດໝາຍ
# ວ່າດ້ວຍການທ່ອງທ່ຽວ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານທ່ອງທ່ຽວ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ, ປະສິດທິພາບ, ຊັບພະຍາກອນທ່ອງທ່ຽວ, ແຫຼ່ງທ່ອງທ່ຽວ ແລະ ສະຖານທີ່ທ່ອງທ່ຽວ ໄດ້ຮັບການອະນຸລັກ, ບູລະນະ ແລະ ຮັກສາ ແນໃສ່ ຮັບປະກັນການສົ່ງເສີມ ແລະ ພັດທະນາການທ່ອງທ່ຽວທາງດ້ານ ທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດ ໃຫ້ຂະຫຍາຍຕົວ ຢ່າງຕໍ່ເນື່ອງ, ກາຍເປັນອຸດສາຫະກໍາທ່ອງທ່ຽວທີ່ທັນສະໄໝ, ເສີມສ້າງຄວາມເຂົ້າໃຈ ຊຶ່ງກັນ ແລະ ກັນ, ສັນຕິພາບ, ມິດຕະພາບ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 (ປັບປຸງ) ການທ່ອງທ່ຽວ**

ການທ່ອງທ່ຽວ ແມ່ນ ກິດຈະກໍາທີ່ຕິດພັນກັບການເດີນທາງຈາກທີ່ຢູ່ອາໄສໃດໜຶ່ງ ໄປຍັງທ້ອງຖິ່ນອື່ນ ຫຼື ປະເທດອື່ນ ເພື່ອການຢ້ຽມຢາມ, ການທ່ຽວຊົມ, ການພັກຜ່ອນ, ການມ່ວນຊື່ນ, ການແລກປ່ຽນວັດທະນະທໍາ, ການກິລາ, ການສົ່ງເສີມສຸຂະພາບ, ການສຶກສາຄົ້ນຄວ້າ, ການວາງສະແດງ, ການປະຊຸມ ແລະ ກິດຈະກໍາອື່ນ.

**ມາດຕາ 3 (ປັບປຸງ) ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໂຮງແຮມ** ໝາຍເຖິງ ສະຖານທີ່ພັກແຮມ ປະເພດໜຶ່ງ ຊຶ່ງມີລະບົບໂຄງສ້າງເປັນຕຶກ ຫຼື ອາຄານ ມີສິບຫ້າຫ້ອງນອນຂຶ້ນໄປ ໂດຍມີສິ່ງອໍານວຍຄວາມສະດວກ, ອຸປະກອນເຄື່ອງໃຊ້ທີ່ມີຄຸນນະພາບ ແລະ ການບໍລິການທີ່ໄດ້ມາດຕະຖານ;

2. **ໂຮງແຮມ ບູຕິກ (Boutique Hotel)** ໝາຍເຖິງ ສະຖານທີ່ພັກແຮມ ປະເພດໜຶ່ງ ຊຶ່ງມີລະບົບໂຄງສ້າງເປັນຕຶກ ຫຼື ອາຄານ ມີ ສິບຫ້ອງນອນຂຶ້ນໄປ, ມີເອກະລັກສະເພາະຕົວ ຕາມຍຸກຕາມສະໄໝ ແລະ ມີຮູບແບບການບໍລິການ ທີ່ໄດ້ມາດຕະຖານຄືກັບໂຮງແຮມ;

3. **ຣີສອດ (Resort)** ໝາຍເຖິງ ສະຖານທີ່ພັກແຮມ ປະເພດໜຶ່ງ ຊຶ່ງມີລະບົບໂຄງສ້າງເປັນຕຶກ ຫຼື ອາຄານ ຢູ່ຕາມສະຖານທີ່ທ່ອງທ່ຽວ ໂດຍມີສິ່ງອຳນວຍຄວາມສະດວກ, ອຸປະກອນເຄື່ອງໃຊ້ທີ່ມີຄຸນນະພາບ ແລະ ການບໍລິການທີ່ໄດ້ມາດຕະຖານ;

4. **ອິນ (Inn)** ໝາຍເຖິງ ສະຖານທີ່ພັກແຮມ ປະເພດໜຶ່ງ ຊຶ່ງມີລະບົບໂຄງສ້າງເປັນຕຶກ ຫຼື ອາຄານ ຂະໜາດນ້ອຍ, ມີສິ່ງອຳນວຍຄວາມສະດວກ, ມີການບໍລິຫານຈັດການ ແລະ ການບໍລິການໃນຮູບແບບທຸລະກິດ;

5. **ໂມເຕັນ (Motel)** ໝາຍເຖິງ ສະຖານທີ່ພັກແຮມ ປະເພດໜຶ່ງ ຊຶ່ງມີລະບົບໂຄງສ້າງເປັນຕຶກ ຫຼື ອາຄານ, ມີສະຖານທີ່ຈອດລົດ, ມີສິ່ງອຳນວຍຄວາມສະດວກ, ມີການບໍລິຫານຈັດການ ແລະ ການບໍລິການຂັ້ນພື້ນຖານໃນຮູບແບບທຸລະກິດ;

6. **ບ່ອນພັກແຮມເຄື່ອນທີ່ (Mobile Accommodation)** ໝາຍເຖິງ ສະຖານທີ່ພັກແຮມ ປະເພດໜຶ່ງ ທີ່ເຄື່ອນຍ້າຍໄປມາໄດ້ ຊຶ່ງປະກອບດ້ວຍ ເຮືອທ່ອງທ່ຽວ, ຕູ້ລົດໄຟ, ລົດທ່ອງທ່ຽວ ທີ່ມີຫ້ອງນອນ ແລະ ອື່ນໆ ໂດຍມີສິ່ງອຳນວຍຄວາມສະດວກ, ມີການບໍລິຫານຈັດການ ແລະ ການບໍລິການໃນຮູບແບບທຸລະກິດ;

7. **ຫໍພັກແຮມ (Hostel)** ໝາຍເຖິງ ສະຖານທີ່ພັກແຮມ ປະເພດໜຶ່ງ ຊຶ່ງມີລະບົບໂຄງສ້າງເປັນຕຶກ ຫຼື ອາຄານ, ມີຫ້ອງນອນ, ຫ້ອງນ້ຳ ແລະ ຫ້ອງອາຫານລວມ ສາມາດໃຊ້ຮ່ວມກັນຫຼາຍຄົນ, ມີລະບົບບໍລິຫານຈັດການ ແລະ ບໍລິການໃນຮູບແບບທຸລະກິດ;

8. **ເຮືອນພັກ** ໝາຍເຖິງ ສະຖານທີ່ພັກແຮມ ປະເພດໜຶ່ງ ຊຶ່ງມີລະບົບໂຄງສ້າງເປັນຕຶກ ຫຼື ອາຄານ ຂະໜາດນ້ອຍທີ່ມີ ສິບສີ່ຫ້ອງນອນລົງມາ ແຕ່ບໍ່ໃຫ້ຫຼຸດ ຫ້າຫ້ອງນອນ ມີສິ່ງອຳນວຍຄວາມສະດວກ, ມີການບໍລິຫານຈັດການ ແລະ ການບໍລິການໃນຮູບແບບທຸລະກິດ;

9. **ຄ້າຍພັກແຮມ (Camp)** ໝາຍເຖິງ ສະຖານທີ່ພັກແຮມຕາກອາກາດ ຢູ່ຕາມສະຖານທີ່ທ່ອງທ່ຽວທຳມະຊາດ ຊຶ່ງມີລະບົບໂຄງສ້າງເປັນ ຕູບ, ເຕັນ ຫຼື ຮ້ານຂະໜາດນ້ອຍ, ມີລະບົບບໍລິຫານຈັດການ ແລະ ການບໍລິການຂັ້ນພື້ນຖານໃນຮູບແບບທຸລະກິດ;

10. **ເຮືອນພັກປະຊາຊົນ (Homestay)** ໝາຍເຖິງ ສະຖານທີ່ພັກແຮມ ຊຶ່ງເປັນເຮືອນຂອງປະຊາຊົນທີ່ມີສິ່ງອຳນວຍຄວາມສະດວກ ແລະ ການບໍລິການຂັ້ນພື້ນຖານ ໃນແບບວິຖີດຳລົງຊີວິດຂອງປະຊາຊົນຢູ່ທ້ອງຖິ່ນ;

11. **ອຸດສາຫະກຳທ່ອງທ່ຽວ** ໝາຍເຖິງ ການບໍລິການ ແກ່ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດຢ່າງເປັນລະບົບຄົບວົງຈອນ ຊຶ່ງປະກອບດ້ວຍ ທຸລະກິດຂົນສົ່ງ, ທຸລະກິດສະຖານທີ່ທ່ອງທ່ຽວ, ທຸລະກິດນຳທ່ຽວ, ທຸລະກິດສະຖານທີ່ພັກແຮມ, ອາຫານ, ເຄື່ອງທີ່ລະນຶກ, ການວາງສະແດງ, ນິທັດສະການ, ເທດສະການ, ງານບຸນ ແລະ ອື່ນໆ ຊຶ່ງນຳໃຊ້ແຮງງານ, ມີການລົງທຶນ ແລະ ວິຊາສະເພາະສູງ, ໃຊ້ເຕັກນິກທີ່ທັນສະໄໝ, ມີການວາງແຜນ, ການຕະຫຼາດ ແລະ ການຈັດຕັ້ງ ຢ່າງເປັນລະບົບ;

12. **ຜະລິດຕະພັນທ່ອງທ່ຽວ** ໝາຍເຖິງ ຊັບພະຍາກອນທ່ອງທ່ຽວ ຕາມທຳມະຊາດ ແລະ ມະນຸດສ້າງຂຶ້ນທີ່ໄດ້ຮັບການປຸງແຕ່ງ ຫຼື ສຳເລັດຮູບ ມີຄວາມພ້ອມ ເພື່ອເປັນສິ່ງຮອງຮັບ, ສະໜອງ ແລະ ບໍລິການ ໃຫ້ນັກທ່ອງທ່ຽວ;

13. **ນິທັດສະການ** ໝາຍເຖິງ ງານວາງສະແດງ ສິນຄ້າ ແລະ ຜະລິດຕະພັນ ຫຼື ກິດຈະກຳ ຂອງມວນຊົນ ທີ່ຈັດຂຶ້ນບໍ່ເປັນປົກກະຕິ ແລະ ບໍ່ເປັນລັກສະນະປະເພນີ ຢູ່ສະຖານທີ່ໃດໜຶ່ງ ທີ່ໄດ້ຮັບອະນຸຍາດຈາກທາງການ ເພື່ອໃຫ້ມວນຊົນໄດ້ ທ່ຽວຊົມ, ຊື້ ຂາຍ, ແລກປ່ຽນ ແລະ ອື່ນໆ;

14. **ເທດສະການ** ໝາຍເຖິງ ການຈັດງານບຸນປະເພນີ ແລະ ງານສະເຫຼີມສະຫຼອງ ປະຈຳຊາດ ຫຼື ທ້ອງຖິ່ນ;

15. **ສວນສະໜຸກ** ໝາຍເຖິງ ສະຖານທີ່ທ່ອງທ່ຽວ ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ທີ່ລວບລວມເອົາບັນດາກິດຈະກຳທ່ອງທ່ຽວ ຫຼື ຜະລິດຕະພັນທ່ອງທ່ຽວໄວ້ບໍລິການນັກທ່ອງທ່ຽວ ຊຶ່ງມີລະບົບບໍລິຫານຈັດການ ແລະ ການບໍລິການ ໃນຮູບແບບທຸລະກິດ;

16. **ຮ້ານອາຫານ ແຟຣນຊາຍ (Franchise)** ໝາຍເຖິງ ຮ້ານອາຫານ ທີ່ມີເຄື່ອງໝາຍການຄ້າ ຊຶ່ງໄດ້ຮັບການປົກປ້ອງຊັບສິນທາງປັນຍາ ກ່ຽວກັບ ຍີ່ຫໍ້, ສັນຍາລັກ ແລະ ມາດຕະຖານ ຖືກຕ້ອງຕາມກົດໝາຍ ໂດຍມີລະບົບບໍລິຫານຈັດການ ແລະ ການບໍລິການ ໃນຮູບແບບທຸລະກິດ;

17. **ຮ້ານກາເຟ (Café)** ໝາຍເຖິງ ຮ້ານອາຫານ ທີ່ບໍລິການອາຫານສຳເລັດຮູບ ປະເພດ ນ້ຳຊາ, ກາເຟ, ນົມ, ເຂົ້າຈີ່, ເຂົ້າໜົມ, ເຄັກ, ໝີ່, ສະຫຼັດ, ເນື້ອອັດສຳເລັດຮູບ, ອາຫານກະປ໋ອງ ຫຼື ອາຫານສຳເລັດຮູບທົ່ວໄປ;

18. ສະປາ (**Spa**) ໝາຍເຖິງ ການບຳບັດດ້ວຍ ນ້ຳ, ສະໝຸນໄພ, ວິທີທາງໂພຊະນາການ ຫຼື ເຕັກໂນໂລຊີທີ່ທັນສະໄໝ ລວມທັງການອອກກຳລັງກາຍ ເປັນຕົ້ນ ການອົບອາຍນ້ຳ, ການອົບແຫ້ງ, ການຂັດຜິວ, ການແຊ່ນ້ຳອຸ່ນ, ການອາບແດດ ເພື່ອສ້າງຄວາມຜ່ອນຄາຍ, ບັນເທົາອາການປວດເມື່ອຍ ແລະ ບຳລຸງຮ່າງກາຍ;

19. **ທຸລະກິດບໍລິການນຳທ່ຽວ (Tour Operator)** ໝາຍເຖິງ ວິສາຫະກິດ ຫຼື ຫົວໜ່ວຍທຸລະກິດ ບໍລິການນຳທ່ຽວ ທີ່ໃຫ້ການບໍລິການ ອຳນວຍຄວາມສະດວກ ດ້ານຍານພາຫະນະຂົນສົ່ງ, ອາຫານ, ສະຖານທີ່ພັກແຮມ, ສະຖານທີ່ທ່ອງທ່ຽວ ແລະ ການບໍລິການອື່ນ ຕໍ່ນັກທ່ອງທ່ຽວ ຕາມແຕ່ລະລາຍການທ່ອງທ່ຽວທີ່ໄດ້ກຳນົດໄວ້;

20. **ທຸລະກິດຕົວແທນການທ່ອງທ່ຽວ (Travel Agency)** ໝາຍເຖິງ ວິສາຫະກິດ ຫຼື ຫົວໜ່ວຍທຸລະກິດ ທີ່ເປັນນາຍໜ້າ ຫຼື ຕົວແທນການຂາຍປີ້ຍານພາຫະນະ, ບັດເຂົ້າຊົມສະຖານທີ່ທ່ອງທ່ຽວ, ບັດເຂົ້າຊົມງານເທດສະການທ່ອງທ່ຽວ, ການຈອງອາຫານ, ສະຖານທີ່ພັກແຮມ, ລາຍການທ່ອງທ່ຽວ ເພື່ອຕອບສະໜອງຄວາມຕ້ອງການໃຫ້ແກ່ນັກທ່ອງທ່ຽວ ທີ່ມີຄວາມສົນໃຈ;

21. **ລາຍການທ່ອງທ່ຽວ (Tour Programs)** ໝາຍເຖິງ ເອກະສານຢັ້ງຢືນກິດຈະກຳທ່ອງທ່ຽວ ແລະ ການບໍລິການ ເຊັ່ນ ກຳນົດເວລາ, ການເດີນທາງ, ອາຫານ, ສະຖານທີ່ພັກແຮມ, ສະຖານທີ່ທ່ອງທ່ຽວ, ຄ່າໃຊ້ຈ່າຍ, ຜູ້ນຳທ່ຽວ ແລະ ກິດຈະກຳອື່ນ;

22. **ດິດສະໂກເທັກ (Discotheque)** ໝາຍເຖິງ ຮ້ານບັນເທີງສຳລັບ ຟັງເພງ, ເຕັ້ນລຳ ດ້ວຍ ຈັງຫວະດົນຕຣີ ແລະ ສຽງເພງທຳນອງໄວ ຢູ່ໃນຫ້ອງບັນເທີງສະເພາະ ຊຶ່ງມີການບໍລິການອາຫານປະເພດຂອງແກ້ມ, ເຫຼົ້າ, ເບຍ, ຄ໋ອກເທວ, ນ້ຳຫວານ ແລະ ເຄື່ອງດື່ມປະເພດຕ່າງໆ, ມີລະບົບບໍລິຫານຈັດການ ແລະ ການບໍລິການໃນຮູບແບບທຸລະກິດ;

23. **ໄນຄລັບ (Night Club)** ໝາຍເຖິງ ຮ້ານບັນເທີງສຳລັບຟັງເພງ, ຟ້ອນ ຫຼື ເຕັ້ນລຳ ດ້ວຍ ຈັງຫວະດົນຕີ ແລະ ສຽງເພງໃນທຳນອງ ຊ້າ ເບົາສະບາຍ ຢູ່ໃນຫ້ອງບັນເທີງສະເພາະ ຊຶ່ງມີການບໍລິການໃນຮູບແບບດຽວກັບດິດສະໂກເທັກ;

24. **ພັບ (Pub)** ໝາຍເຖິງ ຮ້ານບັນເທີງຂະໜາດນ້ອຍສຳລັບຟັງເພງ ຢູ່ໃນຫ້ອງບັນເທີງສະເພາະ ຊຶ່ງມີການບໍລິການອາຫານ ແລະ ການບໍລິການໃນຮູບແບບດຽວກັບໄນຄລັບ;

25. **ສະແນັກບາຣ (Snack Bar)** ໝາຍເຖິງ ຮ້ານບັນເທີງຂະໜາດນ້ອຍ ສຳລັບຟັງເພງ ຢູ່ໃນຫ້ອງບັນເທີງສະເພາະ ຊຶ່ງມີການບໍລິການອາຫານ ແລະ ການບໍລິການໃນຮູບແບບດຽວກັບໄນຄລັບ;

26. **ບາຣ (Bar)** ໝາຍເຖິງ ຮ້ານບັນເທີງຂະໜາດນ້ອຍ ສຳລັບຟັງເພງ ຢູ່ໃນຫ້ອງບັນເທີງສະເພາະ ຊຶ່ງມີການບໍລິການອາຫານ ແລະ ການບໍລິການໃນຮູບແບບດຽວກັບສະແນັກບາຣ;

27. **ຄາຣະໂອເກະ (Karaoke)** ໝາຍເຖິງ ຮ້ານບັນເທີງຂະໜາດນ້ອຍ ສຳລັບຟັງເພງ ຫຼື ຮ້ອງເພງຄາຣະໂອເກະ ທີ່ມີເຄື່ອງມືອຸປະກອນສຳລັບໄວ້ບໍລິການຮ້ອງເພງໃນຮູບແບບຄາຣະໂອເກະ ຕາມທຳນອງເພງ, ສຽງດົນຕີ ແລະ ເນື້ອຮ້ອງທຳນອງເພງ ທີ່ສະແດງອອກຜ່ານໜ້າຈໍພາບ ເປັນພາສາຄາຣະໂອເກະ ຢູ່ໃນຫ້ອງບັນເທີງສະເພາະ ຊຶ່ງມີການບໍລິການອາຫານ ແລະ ການບໍລິການໃນຮູບແບບດຽວກັບບາຣ;

28. **ຄອນເສີດ (Concert)** ໝາຍເຖິງ ການສະແດງ ດົນຕີ, ຮ້ອງເພງ, ຂັບ, ລຳ, ຟ້ອນ, ເຕັ້ນລຳແບບປະສົມປະສານ ເປັນໝູ່ຄະນະ ຫຼື ດ່ຽວ ດ້ວຍຈັງຫວະທຳນອງຕ່າງໆ ຢູ່ໃນສະຖານທີ່ບັນເທີງໃນຮົ່ມ ຫຼື ກາງແຈ້ງ, ມີການບໍລິຫານຈັດການ ແລະ ການບໍລິການໃນຮູບແບບທຸລະກິດ.

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານທ່ອງທ່ຽວ

ລັດ ຖືເອົາວຽກງານທ່ອງທ່ຽວ ເປັນບຸລິມະສິດໜຶ່ງ ໃນການພັດທະນາເສດຖະກິດ-ສັງຄົມ ດ້ວຍການວາງນະໂຍບາຍ, ສະໜອງງົບປະມານ, ປະກອບ ບຸກຄະລາກອນ ແລະ ຍານພາຫະນະ ເພື່ອສົ່ງເສີມການຜະລິດສິນຄ້າ, ການບໍລິການ, ການສ້າງວຽກເຮັດງານທຳ, ສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໃຫ້ດີຂຶ້ນ.

ລັດ ສົ່ງເສີມການທ່ອງທ່ຽວທາງດ້ານ ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ໃຫ້ມີຫຼາຍສີສັນທີ່ໜ້າປະທັບໃຈ, ເປັນໜ້າທ່ອງທ່ຽວ, ກາຍເປັນສະຖານທີ່ທ່ອງທ່ຽວ ຕາມທິດສີຂຽວ, ຍືນຍົງ ແລະ ກາຍເປັນອຸດສາຫະກຳທ່ອງທ່ຽວ ທີ່ທັນສະໄໝ.

ລັດ ຊຸກຍູ້, ສົ່ງເສີມ, ອຳນວຍຄວາມສະດວກ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນເຂົ້າໃນການພັດທະນາ ແລະ ການສົ່ງເສີມການທ່ອງທ່ຽວດ້ວຍການໂຄສະນາ, ໃຫ້ຂໍ້ມູນ ຂ່າວສານ, ການຈັດນິທັດສະການ, ເທດສະການ, ງານເດີນແບບ, ງານບຸນ ກ່ຽວກັບສິລະປະ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງເຜົ່າ ແລະ ມູນເຊື້ອພິລະອາດຫານຂອງປະຊາຊົນລາວບັນດາເຜົ່າ.

### ມາດຕາ 5 (ປັບປຸງ) ຫຼັກການເຄື່ອນໄຫວວຽກງານທ່ອງທ່ຽວ

ການເຄື່ອນໄຫວວຽກງານທ່ອງທ່ຽວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາການທ່ອງທ່ຽວ ຂອງ ສປປ ລາວ;
2. ຮັບປະກັນຄວາມ ສະຫງົບ, ປອດໄພ, ເປັນລະບຽບຮຽບຮ້ອຍ, ຍືນຍົງ, ສະດວກ, ວ່ອງໄວ, ສະເໝີພາບ ແລະ ຍຸຕິທຳ;
3. ຮັບປະກັນການປົກປ້ອງ ຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມຂອງຊາດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ນັກທ່ອງທ່ຽວ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວພັນກັບການທ່ອງທ່ຽວ;
4. ຮັບປະກັນການພັດທະນາການທ່ອງທ່ຽວ ໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ, ທຳມະຊາດ, ວັດທະນະທຳ, ມູນເຊື້ອປະຫວັດສາດຂອງຊາດ ແລະ ສົ່ງເສີມພູມປັນຍາ;
5. ຮັບປະກັນ ການທ່ອງທ່ຽວໃຫ້ມີຄຸນນະພາບ, ໄດ້ມາດຕະຖານ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
6. ຮັບປະກັນການປະສານສົມທົບ ແລະ ຮ່ວມມືກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງປະຊາຊົນ.

### ມາດຕາ 6 (ປັບປຸງ) ພັນທະຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ລ້ວນແຕ່ມີພັນທະປະກອບສ່ວນເຂົ້າໃນການອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມ, ສິລະປະ, ວັນນະຄະດີ, ຫັດຖະກຳ ທີ່ເປັນເອກະລັກສະເພາະ, ຊັບພະຍາກອນທ່ອງທ່ຽວ, ສິ່ງແວດລ້ອມອັນອຸດົມຮັ່ງມີ ແລະ ສວຍງາມ ຂອງຊາດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ່າງປະເທດທີ່ເຂົ້າມາ ສປປ ລາວ ກໍມີພັນທະປະກອບສ່ວນເຂົ້າໃນການພັດທະນາ ແລະ ສົ່ງເສີມ ວຽກງານທ່ອງທ່ຽວ, ປົກປັກຮັກສາ ສະຖານທີ່ທ່ອງທ່ຽວ, ແຫຼ່ງທ່ອງທ່ຽວ,

ຊັບພະຍາກອນທ່ອງທ່ຽວ ແລະ ຜະລິດຕະພັນທ່ອງທ່ຽວ ໃຫ້ມີຄວາມຍືນຍົງ ພ້ອມທັງເຄົາລົບ ແລະ ປະຕິບັດກົດໝາຍ, ນັບຖືວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງລາວ.

**ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານທ່ອງທ່ຽວ ຢູ່ ສປປ ລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທ່ອງທ່ຽວ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ຍົກລະດັບຄວາມຮູ້, ຄວາມສາມາດ ທາງດ້ານວິຊາການ ເພື່ອພັດທະນາວຽກງານທ່ອງທ່ຽວ ໃຫ້ມີຄຸນນະພາບ, ເຂັ້ມແຂງ, ໄດ້ມາດຕະຖານສາກົນ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ຊັບພະຍາກອນທ່ອງທ່ຽວ
### ໝວດທີ 1
### ຊັບພະຍາກອນທ່ອງທ່ຽວ

**ມາດຕາ 9 (ປັບປຸງ) ຊັບພະຍາກອນທ່ອງທ່ຽວ**

ຊັບພະຍາກອນທ່ອງທ່ຽວ ແມ່ນ ສິ່ງທີ່ ເກີດຂຶ້ນເອງຕາມທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງເປັນທ່າແຮງ ແລະ ມີຄຸນຄ່າ ທາງດ້ານການທ່ອງທ່ຽວ.

**ມາດຕາ 10 ປະເພດຊັບພະຍາກອນທ່ອງທ່ຽວ**

ຊັບພະຍາກອນທ່ອງທ່ຽວ ມີ ສອງປະເພດ ດັ່ງນີ້:

1. ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ;
2. ຊັບພະຍາກອນທ່ອງທ່ຽວທີ່ມະນຸດສ້າງຂຶ້ນ.

**ມາດຕາ 11 (ປັບປຸງ) ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ**

ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ ປະກອບດ້ວຍ ທັດສະນີຍະພາບ, ຜາ, ຖ້ຳ, ພູພຽງ, ພູສູງ, ທົ່ງພຽງ, ປ່າໄມ້, ພືດພັນ, ສັດປ່າ, ສັດນ້ຳ, ແມງໄມ້, ດອກໄມ້, ແມ່ນ້ຳ, ພູຫີນປູນ, ດອນ, ຫາດຊາຍ, ໜອງ, ບຶງ, ນ້ຳຕົກຕາດ, ແກ້ງ, ບໍ່ນ້ຳຮ້ອນ, ປາກົດການທຳມະຊາດ ແລະ ອື່ນໆ.

**ມາດຕາ 12 (ປັບປຸງ) ຊັບພະຍາກອນທ່ອງທ່ຽວທີ່ມະນຸດສ້າງຂຶ້ນ**

ຊັບພະຍາກອນທ່ອງທ່ຽວທີ່ມະນຸດສ້າງຂຶ້ນ ປະກອບດ້ວຍ:

1. ຊັບພະຍາກອນທ່ອງທ່ຽວທາງດ້ານວັດທະນະທຳ ເຊັ່ນ ສິລະປະກຳ, ສະຖາປັດຕະຍະກຳ, ປູຊະນີຍະສະຖານ, ບູຮານວັດຖຸ, ບູຮານສະຖານ, ວັດ, ອາຄານ, ບ້ານເຮືອນ, ສິລະປະ, ວັນນະຄະດີ, ນິທັດສະການ, ເທດສະການ, ງານບຸນ ແລະ ພິທີກຳຕ່າງໆ, ວິຖີຊີວິດ, ສູນການຄ້າ, ສູນວາງສະແດງ, ສວນສາທາລະນະ ແລະ ອື່ນໆ;

2. ຊັບພະຍາກອນທ່ອງທ່ຽວທາງດ້ານປະຫວັດສາດ ເຊັ່ນ ຫໍ, ໂຮງ, ສະຖານທີ່ ເກີດ, ອາໄສ ແລະ ເຮັດວຽກຂອງບຸກຄົນສໍາຄັນ, ຮ່ອງຮອຍສະໜໍລະພູມ, ຫໍມູນເຊື້ອ, ຫໍພິພິທະພັນ, ຫໍສະໝຸດ ແລະ ອື່ນໆ;

3. ຊັບພະຍາກອນທ່ອງທ່ຽວແບບທໍາມະຊາດ ເຊັ່ນ ສະຖານທີ່ຈໍາລອງທໍາມະຊາດ ແລະ ອື່ນໆ.

## ໝວດທີ 2
## ແຫຼ່ງທ່ອງທ່ຽວ

**ມາດຕາ 13 (ໃໝ່) ແຫຼ່ງທ່ອງທ່ຽວ**

ແຫຼ່ງທ່ອງທ່ຽວ ແມ່ນ ບ່ອນມີຊັບພະຍາກອນທ່ອງທ່ຽວ ທີ່ໄດ້ຮັບການສໍາຫຼວດ ແລະ ຂຶ້ນທະບຽນ ແຕ່ຍັງບໍ່ທັນໄດ້ຮັບການພັດທະນາເປັນສະຖານທີ່ທ່ອງທ່ຽວ.

**ມາດຕາ 14 (ປັບປຸງ) ການສໍາຫຼວດ ແລະ ຂຶ້ນທະບຽນແຫຼ່ງທ່ອງທ່ຽວ**

ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນເຈົ້າການສໍາຫຼວດ ດ້ວຍການເກັບກໍາ, ລວບລວມຂໍ້ມູນ ກ່ຽວກັບ ທີ່ຕັ້ງ, ກໍານົດຂອບເຂດເນື້ອທີ່, ຄົ້ນຄວ້າ, ຮຽບຮຽງ ປະຫວັດຊັບພະຍາກອນທ່ອງທ່ຽວ ໃນຂອບເຂດທົ່ວປະເທດ ແລ້ວຂຶ້ນທະບຽນເປັນແຫຼ່ງທ່ອງທ່ຽວ ໂດຍປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຕາມກົດໝາຍ.

**ມາດຕາ 15 ການຈັດລະດັບແຫຼ່ງທ່ອງທ່ຽວ**

ແຫຼ່ງທ່ອງທ່ຽວໃນ ສປປ ລາວ ແບ່ງອອກເປັນ ສອງລະດັບ ດັ່ງນີ້:

1. ລະດັບຊາດ;
2. ລະດັບທ້ອງຖິ່ນ.

**ມາດຕາ 16 (ປັບປຸງ) ແຫຼ່ງທ່ອງທ່ຽວລະດັບຊາດ**

ແຫຼ່ງທ່ອງທ່ຽວລະດັບຊາດ ແມ່ນ ແຫຼ່ງທ່ອງທ່ຽວ ທີ່ເປັນມໍຣະດົກລະດັບ ຊາດ, ພາກພື້ນ ຫຼື ລະດັບໂລກ, ແຫຼ່ງທ່ອງທ່ຽວ ທີ່ບໍ່ເປັນມໍຣະດົກ ແຕ່ມີຄວາມຫຼາກຫຼາຍທາງດ້ານຊັບພະຍາກອນທ່ອງທ່ຽວ ທີ່ມີທ່າແຮງບົ່ມຊ້ອນ ແລະ ໄດ້ຮັບຄວາມນິຍົມສູງ, ສ້າງຄວາມສົນໃຈ ແລະ ສາມາດດຶງດູດນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ຽວຊົມເປັນຈໍານວນຫຼາຍ, ເປັນທີ່ຮູ້ຈັກຢ່າງກວ້າງຂວາງ ແລະ ມີຄວາມສໍາຄັນໃນການສ້າງລາຍໄດ້ໃຫ້ແກ່ການທ່ອງທ່ຽວ.

**ມາດຕາ 17 (ປັບປຸງ) ແຫຼ່ງທ່ອງທ່ຽວລະດັບທ້ອງຖິ່ນ**

ແຫຼ່ງທ່ອງທ່ຽວລະດັບທ້ອງຖິ່ນ ແມ່ນ ແຫຼ່ງທ່ອງທ່ຽວທີ່ເປັນມໍຣະດົກລະດັບທ້ອງຖິ່ນ, ແຫຼ່ງທ່ອງທ່ຽວທີ່ບໍ່ເປັນມໍຣະດົກຂອງ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ທີ່ສາມາດສ້າງຄວາມສົນໃຈ ແລະ ດຶງດູດນັກທ່ອງທ່ຽວພາຍໃນປະເທດເປັນສ່ວນຫຼາຍ, ມີພື້ນທີ່ ຊຶ່ງສາມາດພັດທະນາໄດ້ ແລະ ມີຄວາມສໍາຄັນໃນການສ້າງລາຍໄດ້ໃຫ້ແກ່ທ້ອງຖິ່ນ.

## ໝວດທີ 3
## ສະຖານທີ່ທ່ອງທ່ຽວ

**ມາດຕາ 18 (ໃໝ່) ສະຖານທີ່ທ່ອງທ່ຽວ**

ສະຖານທີ່ທ່ອງທ່ຽວ ແມ່ນ ແຫຼ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາ ເພື່ອຮອງຮັບ, ສະໜອງການບໍລິການ ແລະ ດຶງດູດນັກທ່ອງທ່ຽວ ໂດຍມີສິ່ງອໍານວຍຄວາມສະດວກ, ໂຄງລ່າງພື້ນຖານ, ມີການບໍລິຫານ, ມີການບໍລິການທີ່ມີຄຸນນະພາບ, ສະອາດ, ໄດ້ມາດຕະຖານ, ມີຄວາມປອດໄພ, ມີຂອບເຂດເນື້ອທີ່ ແລະ ຂໍ້ມູນການທ່ອງທ່ຽວ ທີ່ຖືກຕ້ອງ.

**ມາດຕາ 19 (ໃໝ່) ປະເພດສະຖານທີ່ທ່ອງທ່ຽວ**

ສະຖານທີ່ທ່ອງທ່ຽວ ມີ ສາມປະເພດ ດັ່ງນີ້:

1. ສະຖານທີ່ທ່ອງທ່ຽວທໍາມະຊາດ;
2. ສະຖານທີ່ທ່ອງທ່ຽວວັດທະນະທໍາ;
3. ສະຖານທີ່ທ່ອງທ່ຽວປະຫວັດສາດ.

**ມາດຕາ 20 (ໃໝ່) ສະຖານທີ່ທ່ອງທ່ຽວທໍາມະຊາດ**

ສະຖານທີ່ທ່ອງທ່ຽວທໍາມະຊາດ ແມ່ນ ແຫຼ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາ ເພື່ອດຶງດູດນັກທ່ອງທ່ຽວມາທ່ຽວຊົມພັກຜ່ອນ ແລະ ສຶກສາຄົ້ນຄວ້າ ເປັນຕົ້ນ ນໍ້າຕົກຕາດ, ບໍ່ນໍ້າຮ້ອນ, ສະຖານທີ່ທ່ອງທ່ຽວກະສິກໍາ, ສວນອຸທິຍານ, ສວນສັດ, ສວນພຶກສາ, ສະຖານທີ່ຕາກອາກາດ, ສະຖານທີ່ຊົມວິວທິວທັດທໍາມະຊາດ ລວມທັງສະຖານທີ່ຈັດກິດຈະກໍາການທ່ອງທ່ຽວ ທີ່ຕິດພັນກັບຊັບພະຍາກອນທ່ອງທ່ຽວຕາມທໍາມະຊາດ ຫຼື ທີ່ມະນຸດສ້າງຂຶ້ນແບບທໍາມະຊາດ.

**ມາດຕາ 21 (ໃໝ່) ສະຖານທີ່ທ່ອງທ່ຽວວັດທະນະທໍາ**

ສະຖານທີ່ທ່ອງທ່ຽວວັດທະນະທໍາ ແມ່ນ ແຫຼ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາ ເພື່ອດຶງດູດນັກທ່ອງທ່ຽວມາ ທ່ຽວຊົມ, ສຶກສາຄົ້ນຄວ້າ, ພັກຜ່ອນ, ມ່ວນຊື່ນ ເປັນຕົ້ນ ບູຮານສະຖານ, ປູຊະນີຍະສະຖານ, ສະຖາປັດຕະຍະກໍາ, ວັດ, ອາຮາມ, ອາຄານ, ເຮືອນ, ສວນວັດທະນະທໍາ, ສູນວາງສະແດງຜະລິດຕະພັນສິລະປະ ແລະ ວັດທະນະທໍາ ລວມທັງສະຖານທີ່ຈັດກິດຈະກໍາການທ່ອງທ່ຽວ ທີ່ຕິດພັນກັບຊັບພະຍາກອນທ່ອງທ່ຽວວັດທະນະທໍາ.

**ມາດຕາ 22 (ໃໝ່) ສະຖານທີ່ທ່ອງທ່ຽວປະຫວັດສາດ**

ສະຖານທີ່ທ່ອງທ່ຽວປະຫວັດສາດ ແມ່ນ ແຫຼ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາ ເພື່ອດຶງດູດນັກທ່ອງທ່ຽວມາ ທ່ຽວຊົມ, ສຶກສາຄົ້ນຄວ້າ ເປັນຕົ້ນ ຫໍພິພິທະພັນ, ອະນຸສອນສະຖານ, ສະຖານທີ່ເກີດ, ອາໄສ ແລະ ເຮັດວຽກຂອງບຸກຄົນສໍາຄັນ, ຫໍ, ໂຮງ, ຮ່ອງຮອຍສະໜໍລະພູມ, ສະຖານທີ່ຈໍາລອງທາງປະຫວັດສາດ ລວມທັງສະຖານທີ່ຈັດກິດຈະກໍາການທ່ອງທ່ຽວ ທີ່ຕິດພັນກັບຊັບພະຍາກອນທ່ອງທ່ຽວປະຫວັດສາດ.

**ມາດຕາ 23 (ໃໝ່) ມາດຕະຖານສະຖານທີ່ທ່ອງທ່ຽວ**

ມາດຕະຖານສະຖານທີ່ທ່ອງທ່ຽວ ແມ່ນ ການກໍານົດຄຸນລັກສະນະສະເພາະຂອງ ຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ສິ່ງແວດລ້ອມ, ຄວາມປອດໄພ ແລະ ບັນຫາອື່ນທີ່ກ່ຽວຂ້ອງ ເພື່ອຕີລາຄາ, ຈັດລະດັບ ແລະ ກໍານົດຄຸນນະພາບ ຂອງສະຖານທີ່ທ່ອງທ່ຽວ.

ລະບຽບການກ່ຽວກັບມາດຕະຖານສະຖານທີ່ທ່ອງທ່ຽວ ໄດ້ກໍານົດໄວ້ຕ່າງຫາກ.

**ມາດຕາ 24 (ໃໝ່) ລະດັບສະຖານທີ່ທ່ອງທ່ຽວ**

ສະຖານທີ່ທ່ອງທ່ຽວ ມີຫຼາຍລະດັບ ຊຶ່ງຕ້ອງໄດ້ຮັບການປະເມີນຜົນ, ຕີລາຄາ ແລະ ກຳນົດຄຸນນະພາບຂອງສະຖານທີ່ທ່ອງທ່ຽວ ໂດຍອີງໃສ່ມາດຕະຖານສະຖານທີ່ທ່ອງທ່ຽວທີ່ໄດ້ກຳນົດໄວ້ໃນລະບຽບການ, ເງື່ອນໄຂ, ຄວາມເປັນຈິງທາງດ້ານ ເຕັກນິກ ແລະ ວິທະຍາສາດ ທີ່ກ່ຽວຂ້ອງ.

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຄຸ້ມຄອງສະຖານທີ່ທ່ອງທ່ຽວ ແຕ່ລະລະດັບ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍມີການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ, ຜູ້ດຳເນີນທຸລະກິດການທ່ອງທ່ຽວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

# ພາກທີ III
# ກິດຈະການ ການທ່ອງທ່ຽວ
## ໝວດທີ 1
## ການໂຄສະນາການທ່ອງທ່ຽວ

**ມາດຕາ 25 (ປັບປຸງ) ການໂຄສະນາການທ່ອງທ່ຽວ**

ການໂຄສະນາການທ່ອງທ່ຽວ ມີຈຸດປະສົງເພື່ອໃຫ້ພົນລະເມືອງເຂົ້າໃຈຄວາມສຳຄັນ ແລະ ປະກອບສ່ວນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ, ເຮັດໃຫ້ນັກທ່ອງທ່ຽວພາຍໃນມີຄວາມທະນົງໃຈ ເດີນທາງທ່ຽວຊົມປະເທດຕົນ ແລະ ເຮັດໃຫ້ນັກທ່ອງທ່ຽວຕ່າງປະເທດ ຮູ້ຈັກ ສປປ ລາວ, ຕ້ອງການມາທ່ຽວຊົມ, ສຶກສາຮຽນຮູ້ ທັງເປັນການເປີດກວ້າງຕະຫຼາດການທ່ອງທ່ຽວຂອງລາວ ໃຫ້ນັບມື້ກວ້າງຂວາງ.

**ມາດຕາ 26 ເນື້ອໃນການໂຄສະນາ**

ການໂຄສະນາການທ່ອງທ່ຽວ ຕ້ອງເລັ່ງໃສ່ເນື້ອໃນສຳຄັນ ເປັນຕົ້ນ ສະຖານທີ່ທ່ອງທ່ຽວ, ຄວາມສວຍງາມ, ຄວາມໂດດເດັ່ນຂອງຊັບພະຍາກອນທ່ອງທ່ຽວ ແລະ ຜະລິດຕະພັນທ່ອງທ່ຽວ ທີ່ມີເອກະລັກຂອງຊາດ, ຄຸນຄ່າທາງດ້ານ ທຳມະຊາດ, ວັດທະນະທຳ, ປະຫວັດສາດ, ການບໍລິການທີ່ມີລັກສະນະ ດຶງດູດ ແລະ ສ້າງຄວາມປະທັບໃຈໃຫ້ແກ່ນັກທ່ອງທ່ຽວ.

**ມາດຕາ 27 (ປັບປຸງ) ຮູບການ ແລະ ວິທີການ ການໂຄສະນາ**

ການໂຄສະນາການທ່ອງທ່ຽວ ນຳໃຊ້ ຮູບການ ແລະ ວິທີການ ດັ່ງນີ້:

1. ຜ່ານສື່ເອເລັກໂຕຣນິກ ແລະ ສື່ສິ່ງພິມ ທັງພາຍໃນ ແລະ ຕ່າງປະເທດ;
2. ຈັດນິທັດສະການ, ເທດສະການ, ງານບຸນ, ງານປະກວດ, ງານວາງສະແດງ ກ່ຽວກັບກິດຈະການການທ່ອງທ່ຽວ ລະດັບທ້ອງຖິ່ນ, ລະດັບຊາດ, ລະດັບພາກພື້ນ ແລະ ສາກົນ;
3. ຜ່ານທຸລະກິດການທ່ອງທ່ຽວ, ສະມາຄົມທຸລະກິດການທ່ອງທ່ຽວ, ອົງການຈັດຕັ້ງສັງຄົມ ແລະ ສຳນັກງານຜູ້ຕາງໜ້າ;
4. ຜ່ານການປະຊາສຳພັນກ່ຽວກັບງານບຸນ, ກິດຈະກຳສົ່ງເສີມການທ່ອງທ່ຽວ;
5. ຈັດການຢັ້ງຢາມສະຖານທີ່ທ່ອງທ່ຽວ, ຈັດລາຍການໂຄສະນາການທ່ອງທ່ຽວ ຢູ່ ຕ່າງປະເທດ;
6. ນຳໃຊ້ຮູບການ ແລະ ວິທີການອື່ນ ທີ່ເປັນການສົ່ງເສີມການທ່ອງທ່ຽວລາວ.

## ໝວດທີ 2
## ການສື່ສານການທ່ອງທ່ຽວ

**ມາດຕາ 28 (ປັບປຸງ) ການສື່ສານການທ່ອງທ່ຽວ**

ການສື່ສານການທ່ອງທ່ຽວ ແມ່ນ ການຕິດຕໍ່ພົວພັນ ຫຼື ການປະຊາສຳພັນ ກ່ຽວກັບ ຂໍ້ມູນ ຂ່າວສານ ການທ່ອງທ່ຽວ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ນັກທ່ອງທ່ຽວ ພາຍໃນ ແລະ ຕ່າງປະເທດ ໄດ້ຮັບຄວາມສະດວກໃນການ ຕິດຕໍ່ສື່ສານ, ເກັບກຳຂໍ້ມູນ ແລະ ຊອກຮູ້ສິ່ງໃໝ່ ກ່ຽວກັບການທ່ອງທ່ຽວ ຢູ່ ສປປ ລາວ ແລະ ຢູ່ ຕ່າງປະເທດ.

**ມາດຕາ 29 (ປັບປຸງ) ການສະໜອງ ຂໍ້ມູນ ຂ່າວສານ ການທ່ອງທ່ຽວ**

ຂະແໜງການ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ຕ້ອງສະໜອງ ຂໍ້ມູນ ຂ່າວສານ ການທ່ອງທ່ຽວ ໃຫ້ຖືກຕ້ອງ, ຊັດເຈນ, ທັນການ ແລະ ເປັນລະບົບ ໂດຍຜ່ານ ສື່ເອເລັກໂຕຣນິກ, ສື່ສິ່ງພິມ, ສູນ ຫຼື ຫ້ອງ ຂໍ້ມູນ ຂ່າວສານ ກ່ຽວກັບ ສະຖານທີ່ທ່ອງທ່ຽວ, ການເດີນທາງ, ສະຖານທີ່ພັກແຮມ, ຮ້ານອາຫານ, ສິ່ງທີ່ຄວນ ແລະ ບໍ່ຄວນປະຕິບັດ ແລະ ອື່ນໆ.

**ມາດຕາ 30 (ປັບປຸງ) ການແນະນຳເຕືອນໄພການທ່ອງທ່ຽວ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງປະສານສົມທົບກັບຂະແໜງການອື່ນ ທີ່ກ່ຽວຂ້ອງ ໃນການແນະນຳເຕືອນໄພການທ່ອງທ່ຽວ ເປັນຕົ້ນ ການອອກແບບ, ຜະລິດ, ຕິດຕັ້ງ ແລະ ຮັກສາ ປ້າຍຊີ້ບອກ ຕາມເສັ້ນທາງ ແລະ ຈຸດສຳຄັນຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ນັກທ່ອງທ່ຽວ ຮູ້ຈັກທີ່ຕັ້ງ, ເຂດອັນຕະລາຍ ແລະ ເຂົ້າເຖິງສະຖານທີ່ທ່ອງທ່ຽວດ້ວຍຄວາມປອດໄພ.

ຂະແໜງການ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ຕ້ອງໃຫ້ ຂໍ້ມູນ ຂ່າວສານ, ຊີ້ແຈງ ກ່ຽວກັບເຫດການສຸກເສີນ ທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ ຊຶ່ງສ້າງຜົນກະທົບ ຫຼື ອາດສ້າງຜົນກະທົບ ຕໍ່ ນັກທ່ອງທ່ຽວ, ສະຖານທີ່ທ່ອງທ່ຽວ ແລະ ຜະລິດຕະພັນທ່ອງທ່ຽວ, ພາບພົດການທ່ອງທ່ຽວ ພ້ອມທັງໃຫ້ຄຳແນະນຳກ່ຽວກັບມາດຕະການປ້ອງກັນຄວາມປອດໄພ ເຊັ່ນ ກໍລະນີແຜ່ນດິນໄຫວ, ນ້ຳຖ້ວມ, ໄຟໄໝ້, ພາຍຸ, ພະຍາດລະບາດ, ອຸບປະຕິເຫດ, ບາດເຈັບ, ເສຍຊີວິດ ແລະ ອື່ນໆ.

## ໝວດທີ 3
## ການບໍລິການຂົນສົ່ງນັກທ່ອງທ່ຽວ

**ມາດຕາ 31 (ປັບປຸງ) ການບໍລິການຂົນສົ່ງນັກທ່ອງທ່ຽວ**

ການບໍລິການຂົນສົ່ງນັກທ່ອງທ່ຽວ ຕ້ອງດຳເນີນຕາມ ແຜນການ, ລາຍການ ແລະ ເງື່ອນໄຂ ການຂົນສົ່ງທີ່ໄດ້ຕົກລົງກັນໄວ້ໃນສັນຍາ, ເວັ້ນເສຍແຕ່ ຄູ່ສັນຍາ ໄດ້ຕົກລົງກັນໃໝ່ ເປັນຢ່າງອື່ນ. ການບໍລິການຂົນສົ່ງນັກທ່ອງທ່ຽວ ຕ້ອງຮັບປະກັນຄວາມປອດໄພ, ມີຄວາມສະອາດ, ການບໍລິການດີ, ສັດຊື່, ຕົງເວລາ, ແຈ້ງຄ່າບໍລິການຢ່າງເປີດເຜີຍ, ຖືກຕ້ອງ, ສົມເຫດສົມຜົນ, ມີປະກັນໄພນັກທ່ອງທ່ຽວ, ຍານພາຫະນະຂົນສົ່ງນັກທ່ອງທ່ຽວ. ໃນກໍລະນີການຂົນສົ່ງນັກທ່ອງທ່ຽວ ດຳເນີນນອກແຜນການ, ລາຍການທ່ອງທ່ຽວ ຫຼື ນອກສັນຍາ ຕ້ອງໄດ້ຮັບການເຫັນດີຈາກຄູ່ສັນຍາ ແລະ ແຈ້ງໃຫ້ ເຈົ້າໜ້າທີ່ຕຳຫຼວດ, ພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນວຍຄວາມສະດວກ ຕໍ່ການຂົນສົ່ງດັ່ງກ່າວ.

ພະນັກງານບໍລິການຂົນສົ່ງນັກທ່ອງທ່ຽວ ຕ້ອງມີສຸຂະພາບດີ, ມີມະນຸດສຳພັນດີ, ໄດ້ຮັບການຝຶກອົບຮົມຂັ້ນພື້ນຖານ ກ່ຽວກັບວຽກງານທ່ອງທ່ຽວ ແລະ ມີຄວາມຮັບຜິດຊອບສູງ, ເຄົາລົບ ແລະ ປະຕິບັດກົດໝາຍທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

**ມາດຕາ 32 (ປັບປຸງ) ຍານພາຫະນະບໍລິການຂົນສົ່ງນັກທ່ອງທ່ຽວ**

ຍານພາຫະນະບໍລິການຂົນສົ່ງນັກທ່ອງທ່ຽວ ປະກອບດ້ວຍ ເຮືອບິນ, ລົດ, ລົດໄຟ, ເຮືອ ແລະ ຍານພາຫະນະຂົນສົ່ງອື່ນ ຊຶ່ງເປັນກຳມະສິດ ຫຼື ສິດນຳໃຊ້ ຂອງວິສາຫະກິດ. ຍານພາຫະນະດັ່ງກ່າວ ຕ້ອງຕິດແຜ່ນກາໝາຍບໍລິການ ຂົນສົ່ງນັກທ່ອງທ່ຽວ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຍົກເວັ້ນ ເຮືອບິນ ແລະ ລົດໄຟ.

**ມາດຕາ 33 (ປັບປຸງ) ມາດຕະຖານຍານພາຫະນະບໍລິການຂົນສົ່ງນັກທ່ອງທ່ຽວ**

ຍານພາຫະນະບໍລິການຂົນສົ່ງນັກທ່ອງທ່ຽວ ຕ້ອງມີຄຸນນະພາບ, ຖືກຕ້ອງຕາມມາດຕະຖານ, ອາຍຸການນຳໃຊ້ ທີ່ໄດ້ກຳນົດໄວ້ໃນລະບຽບການກ່ຽວກັບມາດຕະຖານເຕັກນິກ ຂອງຍານພາຫະນະຂົນສົ່ງ ແລະ ມາດຕະຖານຍານພາຫະນະບໍລິການຂົນສົ່ງນັກທ່ອງທ່ຽວ ແຕ່ລະໄລຍະ, ຮັບປະກັນຄວາມປອດໄພ, ຄວາມສະອາດ, ການບໍລິການດີ ແລະ ມີການປະກັນໄພ.

## ໝວດທີ 4
## ສະຖານທີ່ພັກແຮມ

**ມາດຕາ 34 (ປັບປຸງ) ສະຖານທີ່ພັກແຮມ**

ສະຖານທີ່ພັກແຮມ ແມ່ນ ສະຖານທີ່ພັກ ຂອງ ນັກທ່ອງທ່ຽວ, ນັກເດີນທາງ ແລະ ບຸກຄົນທົ່ວໄປ ທີ່ມີຈຸດປະສົງພັກຜ່ອນ ນອນແຮມຄືນ ຫຼື ແຮມວັນ ຊຶ່ງມີລະບົບໂຄງສ້າງເປັນ ຕຶກ, ອາຄານ, ຮ້ານ, ຫ້ອງ, ຕູບ ແລະ ສະຖານທີ່ພັກແຮມອື່ນ, ມີລະບົບບໍລິຫານຈັດການ ແລະ ການບໍລິການໃນຮູບແບບທຸລະກິດ ຊຶ່ງອາດມີ ຫຼື ບໍ່ມີການບໍລິການອາຫານ ແລະ ເຄື່ອງດື່ມ.

**ມາດຕາ 35 (ໃໝ່) ປະເພດສະຖານທີ່ພັກແຮມ**

ປະເພດສະຖານທີ່ພັກແຮມ ມີ ດັ່ງນີ້:

1. ໂຮງແຮມ;
2. ໂຮງແຮມບູຕິກ;
3. ຣີສອດ;
4. ອິນ;
5. ໂມເຕັນ;
6. ບ່ອນພັກແຮມເຄື່ອນທີ່;
7. ຫໍພັກແຮມ;
8. ເຮືອນພັກ;
9. ຄ້າຍພັກແຮມ;
10. ເຮືອນພັກປະຊາຊົນ;
11. ສະຖານທີ່ພັກແຮມອື່ນ.

ສະຖານທີ່ພັກແຮມ ແຕ່ລະປະເພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 36 (ໃໝ່) ມາດຕະຖານສະຖານທີ່ພັກແຮມ**

ມາດຕະຖານສະຖານທີ່ພັກແຮມ ແມ່ນ ການກຳນົດຄຸນລັກສະນະສະເພາະ ຂອງ ຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ສິ່ງແວດລ້ອມ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບສະຖານທີ່ພັກແຮມ ເພື່ອຕີລາຄາ, ຈັດລະດັບ ແລະ ກຳນົດຄຸນນະພາບຂອງສະຖານທີ່ພັກແຮມ.

ລະບຽບການກ່ຽວກັບມາດຕະຖານສະຖານທີ່ພັກແຮມ ໄດ້ກຳນົດໄວ້ຕ່າງຫາກ.

**ມາດຕາ 37 (ປັບປຸງ) ລະດັບສະຖານທີ່ພັກແຮມ**

ສະຖານທີ່ພັກແຮມມີຫຼາຍລະດັບ ໂດຍມີເຄື່ອງໝາຍຊີ້ບອກລະດັບ ເພື່ອຢັ້ງຢືນມາດຕະຖານ ແລະ ຄຸນນະພາບຂອງສະຖານທີ່ພັກແຮມ ແລະ ຕອບສະໜອງໃຫ້ນັກທ່ອງທ່ຽວມີຫຼາຍທາງເລືອກ.

ການຈັດລະດັບສະຖານທີ່ພັກແຮມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 38 (ປັບປຸງ) ການບໍລິການສະຖານທີ່ພັກແຮມ**

ການບໍລິການສະຖານທີ່ພັກແຮມ ຕ້ອງຮັບປະກັນ ຄຸນນະພາບ, ມາດຕະຖານ, ຄວາມສະອາດ, ຄວາມສະດວກສະບາຍ ແລະ ຄວາມປອດໄພ.

ຜູ້ໃຫ້ບໍລິການສະຖານທີ່ພັກແຮມ ຕ້ອງໄດ້ຮັບການຝຶກອົບຮົມວິຊາສະເພາະດ້ານການບໍລິການພັກແຮມໃນລະດັບທີ່ແນ່ນອນ, ມີມະນຸດສຳພັນດີ, ສຸພາບຮຽບຮ້ອຍ, ສັດຊື່, ຍິ້ມແຍ້ມ ແຈ່ມໃສ ແລະ ອື່ນໆ.

**ມາດຕາ 39 (ປັບປຸງ) ການກຳນົດຄ່າພັກແຮມ**

ຜູ້ປະກອບການສະຖານທີ່ພັກແຮມ ທຸກປະເພດ, ທຸກລະດັບ ຕ້ອງກຳນົດຄ່າພັກແຮມ ເປັນສະກຸນເງິນກີບ ແລະ ແຈ້ງຄ່າພັກແຮມ ໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮັບຮອງເປັນແຕ່ລະໄລຍະ ໂດຍປະສານສົມທົບກັບ ຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການ ແລະ ພາກສ່ວນ ອື່ນທີ່ກ່ຽວຂ້ອງ.

ຄ່າພັກແຮມ ຕ້ອງກຳນົດໃຫ້ຊັດເຈນ, ສົມເຫດສົມຜົນ, ແທດເໝາະກັບລະດັບ ຫຼື ມາດຕະຖານສະຖານທີ່ພັກແຮມນັ້ນ ແລະ ຕ້ອງແຈ້ງໃຫ້ຜູ້ໃຊ້ບໍລິການຮູ້ ຢ່າງເປີດເຜີຍ.

## ໝວດທີ 5
## ຮ້ານອາຫານ

**ມາດຕາ 40 (ໃໝ່) ຮ້ານອາຫານ**

ຮ້ານອາຫານ ແມ່ນ ສະຖານທີ່ບໍລິການອາຫານ ຊຶ່ງມີລະບົບໂຄງສ້າງເປັນ ຕຶກ, ອາຄານ, ຫ້ອງ, ສວນອາຫານ, ພັດຕາຄານ, ຮ້ານອາຫານປະຈຳເຮືອແພ, ລົດ ຫຼື ຍານພາຫະນະອື່ນ ໂດຍມີການຕົບແຕ່ງສວຍງາມ ຕາມຍຸກສະໄໝຂອງຄ່ານິຍົມ, ມີຫຼາກຫຼາຍຮູບແບບ ແລະ ລະດັບທີ່ແຕກຕ່າງກັນ, ມີລະບົບບໍລິຫານຈັດການ ແລະ ການບໍລິການໃນຮູບແບບທຸລະກິດ, ມີສິ່ງອຳນວຍຄວາມສະດວກດ້ານການບໍລິການອາຫານ ທີ່ມີຄຸນນະພາບ, ໄດ້ມາດຕະຖານສະອາດ ແລະ ປອດໄພ.

**ມາດຕາ 41 (ໃໝ່) ປະເພດຮ້ານອາຫານ**

ຮ້ານອາຫານ ມີ ສອງປະເພດ ຄື:

1. ຮ້ານອາຫານທົ່ວໄປ ຊຶ່ງປະກອບດ້ວຍ ຕຶກ, ອາຄານ, ຮ້ານ, ຫ້ອງ, ສວນອາຫານ, ພັດຕາຄານ, ຮ້ານອາຫານເຮືອແພ, ຮ້ານອາຫານ ແຟຣນຊາຍ, ຮ້ານຄາເຟ ແລະ ຮ້ານອາຫານຮູບແບບອື່ນ ທີ່ໄດ້ຈົດທະບຽນ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍ;

2. ຮ້ານອາຫານໃນເຄືອຂ່າຍກິດຈະການການທ່ອງທ່ຽວ ຊຶ່ງປະກອບດ້ວຍ ຮ້ານອາຫານປະຈຳສະຖານທີ່ພັກແຮມ, ສະຖານທີ່ບັນເທີງ, ສະຖານທີ່ທ່ອງທ່ຽວ ແລະ ສະຖານທີ່ອື່ນທີ່ຂຶ້ນກັບສະຖານທີ່ຕັ້ງ, ໂຄງປະກອບ ແລະ ການຈັດຕັ້ງຂອງກິດຈະການການທ່ອງທ່ຽວດັ່ງກ່າວ.

**ມາດຕາ 42 (ໃໝ່) ມາດຕະຖານຮ້ານອາຫານ**

ມາດຕະຖານຮ້ານອາຫານ ແມ່ນ ການກຳນົດຄຸນລັກສະນະສະເພາະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ກຳມະວິທີ, ສິ່ງແວດລ້ອມ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບຮ້ານອາຫານ ເພື່ອຕີລາຄາ, ຈັດລະດັບ ແລະ ກຳນົດຄຸນນະພາບ ຂອງຮ້ານອາຫານ.

ລະບຽບການກ່ຽວກັບມາດຕະຖານຮ້ານອາຫານ ໄດ້ກຳນົດໄວ້ຕ່າງຫາກ.

**ມາດຕາ 43 (ປັບປຸງ) ລະດັບຮ້ານອາຫານ**

ຮ້ານອາຫານ ມີຫຼາຍລະດັບ ໂດຍມີເຄື່ອງໝາຍຊີ້ບອກລະດັບ ຊຶ່ງຕ້ອງໄດ້ຮັບການປະເມີນຜົນ ແລະ ຈັດລະດັບ ເພື່ອຢັ້ງຢືນມາດຕະຖານ ແລະ ຄຸນນະພາບຮ້ານອາຫານ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ. ໃນທຸກ ສອງປີ ຕ້ອງມີການປະເມີນຜົນ ແລະ ຈັດລະດັບ ມາດຕະຖານຄືນໃໝ່ ນັບແຕ່ວັນໄດ້ຮັບການຢັ້ງຢືນການຈັດລະດັບຮ້ານອາຫານ ຄັ້ງຫຼ້າສຸດ ເປັນຕົ້ນໄປ.

ການຈັດລະດັບຮ້ານອາຫານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 44 (ປັບປຸງ) ການບໍລິການອາຫານ**

ອາຫານທີ່ບໍລິການໃຫ້ນັກທ່ອງທ່ຽວ ຕ້ອງຮັບປະກັນ ຄຸນນະພາບ, ມາດຕະຖານ, ຄວາມປອດໄພ, ຄວາມສະອາດ ຖືກຕ້ອງຕາມຫຼັກອະນາໄມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາຫານ.

ອາຫານ ທີ່ບໍລິການໃຫ້ນັກທ່ອງທ່ຽວ ຕ້ອງມີຫຼາຍປະເພດ ເພື່ອໃຫ້ນັກທ່ອງທ່ຽວມີຫຼາຍທາງເລືອກ ແລະ ບໍລິການ ຢູ່ບ່ອນເໝາະສົມ.

ຜູ້ບໍລິການອາຫານ ຕ້ອງໄດ້ຮັບການຝຶກອົບຮົມວິຊາສະເພາະດ້ານການບໍລິການ, ຄວາມປອດໄພ ແລະ ສຸຂານາໄມອາຫານ ໃນລະດັບທີ່ແນ່ນອນ, ມີມະນຸດສຳພັນດີ, ສຸພາບຮຽບຮ້ອຍ, ສັດຊື່, ຍິ້ມແຍ້ມ ແຈ່ມໃສ ແລະ ບຸກຄະລິກອື່ນ.

**ມາດຕາ 45 (ປັບປຸງ) ການກຳນົດຄ່າອາຫານ**

ຜູ້ປະກອບການຮ້ານອາຫານ ທຸກປະເພດ, ທຸກລະດັບ ຕ້ອງກຳນົດຄ່າອາຫານ ເປັນສະກຸນເງິນກີບ ຢ່າງຊັດເຈນ, ສົມເຫດສົມຜົນ, ແທດເໝາະກັບປະເພດອາຫານ, ລະດັບການບໍລິການ ແລະ ຕ້ອງແຈ້ງໃຫ້ຜູ້ໃຊ້ບໍລິການຮູ້ຢ່າງເປີດເຜີຍ ແລະ ຈະແຈ້ງ.

ຮ້ານອາຫານ ຕ້ອງມີປື້ມລາຍການອາຫານ ພ້ອມທັງກຳນົດລາຄາອາຫານສຳລັບແຕ່ລະລາຍການຢ່າງຈະແຈ້ງ.

## ໝວດທີ 6
## ການບັນເທີງ

**ມາດຕາ 46 (ປັບປຸງ) ການບັນເທີງ**

ການບັນເທີງ ແມ່ນ ການໃຫ້ຄວາມເບີກບານມ່ວນຊື່ນ, ຄວາມສຸກສັນ ດ້ວຍສຽງດົນຕີ, ສຽງເພງ, ຂັບລຳ, ຕະຫຼົກ, ຟ້ອນ, ສະແດງລະຄອນ ແລະ ອື່ນໆ.

ການບັນເທີງ ປະກອບດ້ວຍ ການສະແດງ ສິລະປະ, ວັນນະຄະດີ, ດົນຕີພື້ນເມືອງ, ດົນຕີສາກົນ, ການຟ້ອນ, ການຮ້ອງເພງ, ການຂັບລຳພື້ນເມືອງ ແລະ ການສະແດງອື່ນ ຊຶ່ງສະແດງເຖິງເອກະລັກທາງດ້ານ ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ, ສິ່ງຍອດຍິ່ງ ແລະ ກ້າວໜ້າຂອງໂລກ.

**ມາດຕາ 47 (ປັບປຸງ) ປະເພດການບໍລິການບັນເທີງ**

ປະເພດການບໍລິການບັນເທີງ ມີ ດັ່ງນີ້:

1. ດິດສະໂກເທັກ;
2. ໄນຄລັບ;
3. ຜັບ;
4. ສະເນັກບາຣ;
5. ບາຣ;
6. ຄາຣະໂອເກະ;
7. ຄອນເສີດ;
8. ການບໍລິການບັນເທີງອື່ນ.

ການບໍລິການບັນເທີງ ແຕ່ລະປະເພດ ຕ້ອງໄດ້ຮັບອະນຸຍາດດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍ, ຍົກເວັ້ນຄອນເສີດ.

ສຳລັບການຈັດງານຄອນເສີດ ຕ້ອງຂໍອະນຸຍາດນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 48 (ປັບປຸງ) ສະຖານທີ່ບັນເທີງ**

ການບໍລິການບັນເທີງ ສາມາດຈັດຂຶ້ນຢູ່ສະຖານທີ່ ດັ່ງນີ້:

1. ສະຖານທີ່ບັນເທີງສະເພາະ;
2. ສະຖານທີ່ ພັກແຮມ, ຮ້ານອາຫານ, ພັດຕາຄານ ຫຼື ສວນອາຫານ;
3. ສະຖານທີ່ບັນເທີງກາງແຈ້ງ.

ແຕ່ລະສະຖານທີ່ບັນເທີງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 49 (ປັບປຸງ) ການບໍລິການບັນເທີງ**

ການບໍລິການບັນເທີງ ຕ້ອງຮັບປະກັນຄຸນນະພາບ, ຄວາມປອດໄພ, ຄວາມສະດວກສະບາຍ, ຄວາມສະອາດ, ມີຫ້ອງເກັບສຽງສະເພາະ ແລະ ບໍ່ມີສຽງລົບກວນບຸກຄົນອື່ນ ທີ່ຢູ່ພາຍນອກ ຫຼື ບໍລິເວນໃກ້ຄຽງສະຖານທີ່ບັນເທີງ, ຍົກເວັ້ນຄອນເສີດກາງແຈ້ງ.

ຜູ້ໃຫ້ບໍລິການ ການບັນເທີງ ຕ້ອງໄດ້ຮັບການຝຶກອົບຮົມວິຊາສະເພາະດ້ານການບໍລິການ ການບັນເທີງ, ມີມະນຸດສຳພັນດີ, ສຸພາບຮຽບຮ້ອຍ, ສັດຊື່, ຍິ້ມແຍ້ມ ແຈ່ມໃສ, ມີສຸຂະພາບດີ.

**ມາດຕາ 50 (ໃໝ່) ມາດຕະຖານການບໍລິການບັນເທີງ**

ມາດຕະຖານການບໍລິການບັນເທີງ ແມ່ນ ການກຳນົດຄຸນລັກສະນະສະເພາະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ສິ່ງແວດລ້ອມ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບການບໍລິການບັນເທີງ ເພື່ອຕີລາຄາ, ຈັດປະເພດ ແລະ ກຳນົດຄຸນນະພາບ ຂອງການບໍລິການບັນເທີງ.

ລະບຽບການກ່ຽວກັບມາດຕະຖານການບໍລິການບັນເທີງ ໄດ້ກຳນົດໄວ້ຕ່າງຫາກ.

**ມາດຕາ 51 (ປັບປຸງ) ລະດັບການບໍລິການບັນເທີງ**

ການບໍລິການບັນເທີງ ມີຫຼາຍລະດັບ ໂດຍມີເຄື່ອງໝາຍຊີ້ບອກລະດັບ ເພື່ອຢັ້ງຢືນມາດຕະຖານ ແລະ ຄຸນນະພາບ ຂອງການບໍລິການບັນເທີງ ແລະ ຕອບສະໜອງໃຫ້ນັກທ່ອງທ່ຽວມີຫຼາຍທາງເລືອກ.

ການຈັດລະດັບການບໍລິການບັນເທີງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 7
## ການສົ່ງເສີມສຸຂະພາບ

**ມາດຕາ 52 ການສົ່ງເສີມສຸຂະພາບ**

ການສົ່ງເສີມສຸຂະພາບ ປະກອບດ້ວຍ ການຫັດກາຍຍະບໍລິຫານ, ນວດແຜນບູຮານ, ຮົມຢາພື້ນເມືອງ, ແຊ່ນ້ຳອຸ່ນ, ອາບແດດ, ສະປາ ແລະ ອື່ນໆ ຕາມຄວາມເໝາະສົມ.

ການສົ່ງເສີມສຸຂະພາບ ອາດຈະຈັດຂຶ້ນ ຢູ່ສະຖານທີ່ພັກແຮມ ຫຼື ຢູ່ສະຖານທີ່ສະເພາະ.

**ມາດຕາ 53 (ປັບປຸງ) ການບໍລິການສົ່ງເສີມສຸຂະພາບ**

ການບໍລິການສົ່ງເສີມສຸຂະພາບ ຕ້ອງຮັບປະກັນ ຄຸນນະພາບ, ຄວາມສະອາດ, ຄວາມປອດໄພ, ຄວາມສະດວກສະບາຍ ແລະ ການຜ່ອນຄາຍ ໃຫ້ແກ່ຜູ້ໃຊ້ບໍລິການ.

ພະນັກງານບໍລິການສົ່ງເສີມສຸຂະພາບ ຕ້ອງໄດ້ຮັບການຝຶກອົບຮົມວິຊາສະເພາະ ດ້ານການບໍລິການສົ່ງເສີມສຸຂະພາບ, ມີມະນຸດສຳພັນດີ, ນຸ່ງຖືສຸພາບຮຽບຮ້ອຍ, ສັດຊື່, ຍິ້ມແຍ້ມ ແຈ່ມໃສ ແລະ ມີສຸຂະພາບດີ.

## ໝວດທີ 8
## ເຄື່ອງທີ່ລະນຶກ

**ມາດຕາ 54 (ປັບປຸງ) ເຄື່ອງທີ່ລະນຶກ**

ເຄື່ອງທີ່ລະນຶກ ແມ່ນ ຜະລິດຕະພັນ ຫຼື ສິນຄ້າ ພາຍໃນ ຊຶ່ງເປັນສີມືຂອງປະຊາຊົນລາວບັນດາເຜົ່າ ທີ່ມີຄວາມປານີດ ແລະ ຄວາມສວຍງາມ ກ່ຽວກັບ ວິຈິດສິນ, ສິລະປະ, ວັດທະນະທຳ, ປະຫວັດສາດ ແລະ ຮີດຄອງປະເພນີອັນດີງາມຂອງ ຊາດ, ເຜົ່າ ສ້າງຄວາມຊົງຈຳທີ່ດີ ໃຫ້ແກ່ນັກທ່ອງທ່ຽວ ແລະ ບຸກຄົນທົ່ວໄປ.

**ມາດຕາ 55 (ປັບປຸງ) ປະເພດເຄື່ອງທີ່ລະນຶກ**

ເຄື່ອງທີ່ລະນຶກ ມີຫຼາຍປະເພດ ເຊັ່ນ ເຄື່ອງປະດັບເງິນຄຳ, ເຄື່ອງຈັກສານ, ແຜ່ນແພ ລາຍຈົກ, ມັດໝີ່, ຖັກແສ່ວ, ເຄື່ອງເອ້, ເຄື່ອງແກະສະຫຼັກ, ຮູບແຕ້ມ, ເຄື່ອງປັ້ນດິນເຜົາ, ເຄື່ອງດົນຕີ ແລະ ເຄື່ອງທີ່ລະນຶກອື່ນທີ່ມີຄວາມປານີດ ຊຶ່ງສ່ອງແສງ ເຖິງຮີດຄອງປະເພນີ, ວັດທະນະທຳອັນດີງາມ ແລະ ວິຖີຊີວິດຂອງປະຊາຊົນລາວບັນດາເຜົ່າ.

ເຄື່ອງທີ່ລະນຶກ ໄດ້ຮັບການຊຸກຍູ້, ສົ່ງເສີມ ໃຫ້ຜະລິດຢູ່ພາຍໃນ, ຊື້ ຂາຍ ຢ່າງກວ້າງຂວາງ ແລະ ຖືກຕ້ອງຕາມກົດໝາຍ.

**ມາດຕາ 56 (ປັບປຸງ) ສະຖານທີ່ ຈັດວາງ ແລະ ຂາຍ ເຄື່ອງທີ່ລະນຶກ**

ເຄື່ອງທີ່ລະນຶກ ໃຫ້ຈັດວາງ ແລະ ຂາຍ ໃນສະຖານທີ່ພັກແຮມ, ຕະຫຼາດ, ຮ້ານຄ້າ ຫຼື ສະຖານທີ່ອື່ນ ບ່ອນນັກທ່ອງທ່ຽວໄປມາ ທີ່ມີການຕົບແຕ່ງຢ່າງເໝາະສົມ ແລະ ມີຄວາມສະອາດງາມຕາ.

## ໝວດທີ 9
## ຄວາມປອດໄພ

**ມາດຕາ 57 (ປັບປຸງ) ຄວາມປອດໄພ**

ກິດຈະການການທ່ອງທ່ຽວ ຕ້ອງຮັບປະກັນຄວາມປອດໄພທາງດ້ານ ຊີວິດ, ສຸຂະພາບ ແລະ ຊັບສິນຂອງນັກທ່ອງທ່ຽວ. ຜູ້ປະກອບການທ່ອງທ່ຽວ ຕ້ອງມີຄວາມຮູ້ພື້ນຖານ, ວິທີການ ແລະ ມາດຕະຖານເຕັກນິກ ກ່ຽວກັບ ຄວາມປອດໄພ, ການຮັກສາຄວາມປອດໄພ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ໃນກໍລະນີ ເກີດປາກົດການຫຍໍ້ທໍ້ ຫຼື ເຫດການສຸກເສີນ ຜູ້ປະກອບການທ່ອງທ່ຽວ ຫຼື ຜູ້ຮູ້ເຫັນເຫດການ ຕ້ອງໃຫ້ຄວາມຊ່ວຍເຫຼືອແກ່ນັກທ່ອງທ່ຽວ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢ່າງທັນການ.

**ມາດຕາ 58 (ປັບປຸງ) ຕຳຫຼວດຄຸ້ມຄອງການທ່ອງທ່ຽວ**

ຕຳຫຼວດຄຸ້ມຄອງການທ່ອງທ່ຽວ ແມ່ນ ເຈົ້າໜ້າທີ່ຂອງຂະແໜງການປ້ອງກັນຄວາມສະຫງົບ ຊຶ່ງໄດ້ຮັບການແຕ່ງຕັ້ງ ແລະ ໄດ້ຮັບການມອບໝາຍ ໃຫ້ປະຕິບັດໜ້າທີ່ຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ, ອຳນວຍຄວາມສະດວກໃນການທ່ອງທ່ຽວ, ໃຫ້ການຊ່ວຍເຫຼືອແກ່ນັກທ່ອງທ່ຽວ ແລະ ຜູ້ດຳເນີນທຸລະກິດການທ່ອງທ່ຽວ, ຕິດຕາມ ຂະບວນຄາຣາວານ ຫຼື ຂະບວນນັກທ່ອງທ່ຽວທີ່ມີຈຳນວນຫຼາຍ ຕາມການສະເໜີຂອງຜູ້ດຳເນີນທຸລະກິດການທ່ອງທ່ຽວ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ຕຳຫຼວດຄຸ້ມຄອງການທ່ອງທ່ຽວ ຕ້ອງສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບຄວາມປອດໄພໃນການທ່ອງທ່ຽວ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສະກັດກັ້ນ ແລະ ຕ້ານການກະທຳຜິດ ທີ່ຕິດພັນກັບການທ່ອງທ່ຽວ ແລະ ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ສິດ ແລະ ໜ້າທີ່ຂອງຕຳຫຼວດຄຸ້ມຄອງການທ່ອງທ່ຽວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 59 (ໃໝ່) ການຊ່ວຍເຫຼືອສຸກເສີນ**

ໃນກໍລະນີເກີດອຸບປະຕິເຫດ, ເຫດການສຸກເສີນ ຜູ້ດຳເນີນທຸລະກິດການທ່ອງທ່ຽວ, ພະນັກງານນຳທ່ຽວ ຫຼື ຜູ້ທີ່ພົບເຫັນ ຕ້ອງໃຫ້ການຊ່ວຍເຫຼືອແກ່ນັກທ່ອງທ່ຽວ ເພື່ອກູ້ຊີບ, ກູ້ໄພ ຕາມແຕ່ລະກໍລະນີ ແລ້ວແຈ້ງຕຳຫຼວດຄຸ້ມຄອງການທ່ອງທ່ຽວ, ໜ່ວຍກູ້ໄພ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຢ່າງທັນການ.

**ມາດຕາ 60 (ປັບປຸງ) ການປະກັນໄພ**

ເພື່ອຮັບປະກັນການໃຊ້ແທນຄ່າເສຍຫາຍທີ່ອາດຈະເກີດຂຶ້ນ ຜູ້ດຳເນີນທຸລະກິດການທ່ອງທ່ຽວ ຕ້ອງມີການປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະກັນໄພ.

## ໝວດທີ 10
## ການບໍລິການນຳທ່ຽວ

**ມາດຕາ 61 (ໃໝ່) ຮູບແບບການບໍລິການນຳທ່ຽວ**

ການບໍລິການນຳທ່ຽວ ມີ ສາມຮູບແບບ ດັ່ງນີ້:

1. ການບໍລິການນຳທ່ຽວທາງບົກ ເປັນຕົ້ນ ເດີນປ່າ, ປີນຜາ, ໂອ້ນສະລິງ, ທ່ຽວຖ້ຳ;
2. ການບໍລິການນຳທ່ຽວທາງນ້ຳ ເປັນຕົ້ນ ຂີ່ ເຮືອ, ແພ, ກົງເບັງ, ໂຕນນ້ຳ, ໂອ້ນສະລິງໂຕນນ້ຳ;
3. ການບໍລິການນຳທ່ຽວທາງອາກາດ ເປັນຕົ້ນ ຂີ່ບາລູນ, ຂີ່ພາລາມໍເຕີ, ໂດດຈ້ອງ.

ການບໍລິການນຳທ່ຽວແຕ່ລະຮູບແບບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 62 ປະເພດການບໍລິການນຳທ່ຽວ**

ການບໍລິການນຳທ່ຽວ ແບ່ງອອກເປັນ ສາມປະເພດ ດັ່ງນີ້:

1. ການນຳທ່ຽວລະຫວ່າງປະເທດ;
2. ການນຳທ່ຽວພາຍໃນປະເທດ;
3. ການນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ.

**ມາດຕາ 63 ການບໍລິການນຳທ່ຽວລະຫວ່າງປະເທດ**

ການບໍລິການນຳທ່ຽວລະຫວ່າງປະເທດ ແມ່ນ ການບໍລິການນຳນັກທ່ອງທ່ຽວ ເຂົ້າມາໃນປະເທດ ຫຼື ນຳນັກທ່ອງທ່ຽວອອກໄປຕ່າງປະເທດ ເພື່ອຈຸດປະສົງທ່ອງທ່ຽວ.

**ມາດຕາ 64 ການບໍລິການນຳທ່ຽວພາຍໃນປະເທດ**

ການບໍລິການນຳທ່ຽວພາຍໃນປະເທດ ແມ່ນ ການບໍລິການນຳນັກທ່ອງທ່ຽວ ຢູ່ ສປປ ລາວ ທ່ຽວຊົມ ສະຖານທີ່ຕ່າງໆ ພາຍໃນປະເທດ.

**ມາດຕາ 65 ການບໍລິການນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ**

ການບໍລິການນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ ແມ່ນ ການບໍລິການນຳນັກທ່ອງທ່ຽວ ທ່ຽວຊົມ ໃນສະຖານທີ່ທ່ອງທ່ຽວໃດໜຶ່ງຂອງ ສປປ ລາວ.

**ມາດຕາ 66 (ປັບປຸງ) ການຈັດການບໍລິການນຳທ່ຽວ**

ການຈັດການບໍລິການນຳທ່ຽວ ຕ້ອງດຳເນີນຕາມ ແຜນການ, ລາຍການ, ຕາຕະລາງເວລາ, ມາດຕະຖານ ແລະ ຄຸນນະພາບ ການນຳທ່ຽວ ທີ່ໄດ້ກຳນົດໄວ້.

ການບໍລິການນຳທ່ຽວ ສາມາດປ່ຽນແປງ ວັນ, ເວລາ ການເດີນທາງ, ສະຖານທີ່ທ່ອງທ່ຽວ ແລະ ຈຸດໝາຍປາຍທາງ ຫຼື ເສັ້ນທາງ ຕາມການຕົກລົງເຫັນດີ ເປັນລາຍລັກອັກສອນ ຫຼື ດ້ວຍວາຈາ ລະຫວ່າງ ວິສາຫະກິດບໍລິການນຳທ່ຽວ ຫຼື ຜູ້ໃຫ້ບໍລິການ ແລະ ນັກທ່ອງທ່ຽວ.

ໃນກໍລະນີນັກທ່ອງທ່ຽວຕ່າງປະເທດມາທ່ຽວເປັນກຸ່ມ ແລະ ມີການປ່ຽນແປງຈຸດໝາຍປາຍທາງ ຫຼື ເສັ້ນທາງການທ່ອງທ່ຽວນັ້ນ ວິສາຫະກິດບໍລິການນຳທ່ຽວ ຕ້ອງແຈ້ງຕໍ່ຕຳຫຼວດຄຸ້ມຄອງການທ່ອງທ່ຽວ.

**ມາດຕາ 67 (ປັບປຸງ) ການກຳນົດຄ່າບໍລິການນຳທ່ຽວ**

ວິສາຫະກິດບໍລິການນຳທ່ຽວ ຕ້ອງກຳນົດຄ່າບໍລິການນຳທ່ຽວ ເປັນສະກຸນເງິນກີບ ທີ່ເໝາະສົມກັບລາຍການ, ຕາຕະລາງເວລາ, ມາດຕະຖານ, ຄຸນນະພາບການນຳທ່ຽວ ແລະ ຕ້ອງແຈ້ງໃຫ້ນັກທ່ອງທ່ຽວຮູ້ ຢ່າງເປີດເຜີຍ.

ການປ່ຽນແປງ ລາຄາ ຫຼື ລາຍການທ່ອງທ່ຽວ ດ້ວຍເຫດຜົນໃດໜຶ່ງ ຕ້ອງໄດ້ແຈ້ງໃຫ້ນັກທ່ອງທ່ຽວຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ສາມວັນ ກ່ອນການບໍລິການນຳທ່ຽວ.

## ໝວດທີ 11
## ພະນັກງານນຳທ່ຽວ

**ມາດຕາ 68 (ໃໝ່) ພະນັກງານນຳທ່ຽວ**

ພະນັກງານນຳທ່ຽວ ແມ່ນ ບຸກຄົນ ທີ່ເຮັດໜ້າທີ່ ພາທ່ຽວ ແລະ ຮ່ວມເດີນທາງໄປກັບນັກທ່ອງທ່ຽວ ເພື່ອທ່ຽວຊົມສະຖານທີ່ທ່ອງທ່ຽວ ຕາມລາຍການທ່ອງທ່ຽວ ພ້ອມທັງໃຫ້ຂໍ້ມູນ ແລະ ອະທິບາຍ ກ່ຽວກັບສະຖານທີ່ທ່ອງທ່ຽວ, ປະຫວັດຄວາມເປັນມາຂອງສະຖານທີ່ທ່ອງທ່ຽວ ຫຼື ຜະລິດຕະພັນທ່ອງທ່ຽວ ຢ່າງຖືກຕ້ອງ.

**ມາດຕາ 69 (ປັບປຸງ) ປະເພດພະນັກງານນຳທ່ຽວ**

ພະນັກງານນຳທ່ຽວ ມີ ສອງປະເພດ ດັ່ງນີ້:

1. ພະນັກງານນຳທ່ຽວ ທີ່ສັງກັດວິສາຫະກິດບໍລິການນຳທ່ຽວ;
2. ພະນັກງານນຳທ່ຽວ ທີ່ບໍ່ສັງກັດວິສາຫະກິດບໍລິການນຳທ່ຽວ.

**ມາດຕາ 70 (ປັບປຸງ) ລະດັບພະນັກງານນຳທ່ຽວ**

ພະນັກງານນຳທ່ຽວ ມີ ສາມລະດັບ ດັ່ງນີ້:

1. ພະນັກງານນຳທ່ຽວລະດັບຊາດ;
2. ພະນັກງານນຳທ່ຽວລະດັບແຂວງ;
3. ພະນັກງານນຳທ່ຽວລະດັບພື້ນທີ່ສະເພາະໃດໜຶ່ງ.

**ມາດຕາ 71 (ໃໝ່) ພະນັກງານນຳທ່ຽວລະດັບຊາດ**

ພະນັກງານນຳທ່ຽວລະດັບຊາດ ແມ່ນ ພະນັກງານນຳທ່ຽວທີ່ສັງກັດ ຫຼື ບໍ່ສັງກັດວິສາຫະກິດບໍລິການນຳທ່ຽວໃດໜຶ່ງ ຊຶ່ງໄດ້ຜ່ານການຝຶກອົບຮົມຫຼັກສູດພະນັກງານນຳທ່ຽວລະດັບຊາດ ແລະ ໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການເປັນຜູ້ບໍລິການນຳທ່ຽວໃນຂອບເຂດທົ່ວປະເທດ ແລະ ເປັນຜູ້ນຳພາຄະນະນັກທ່ອງທ່ຽວພາຍໃນປະເທດ ເດີນທາງໄປທ່ຽວຕ່າງປະເທດ ຕາມລາຍການທ່ອງທ່ຽວ.

**ມາດຕາ 72 (ໃໝ່) ພະນັກງານນຳທ່ຽວລະດັບແຂວງ**

ພະນັກງານນຳທ່ຽວລະດັບແຂວງ ແມ່ນ ພະນັກງານນຳທ່ຽວທີ່ສັງກັດ ຫຼື ບໍ່ສັງກັດວິສາຫະກິດບໍລິການນຳທ່ຽວໃດໜຶ່ງ ຊຶ່ງໄດ້ຜ່ານການຝຶກອົບຮົມຫຼັກສູດພະນັກງານນຳທ່ຽວລະດັບແຂວງ ແລະ ໄດ້ຮັບອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ໃນການເປັນຜູ້ບໍລິການນຳທ່ຽວໃນຂອບເຂດພາຍໃນແຂວງ, ນະຄອນຫຼວງ ຕາມລາຍການທ່ອງທ່ຽວ.

**ມາດຕາ 73 (ໃໝ່) ພະນັກງານນໍາທ່ຽວລະດັບພື້ນທີ່ສະເພາະໃດໜຶ່ງ**

ພະນັກງານນໍາທ່ຽວລະດັບພື້ນທີ່ສະເພາະໃດໜຶ່ງ ແມ່ນ ພະນັກງານນໍາທ່ຽວທີ່ສັງກັດ ຫຼື ບໍ່ສັງກັດວິສາຫະກິດບໍລິການນໍາທ່ຽວໃດໜຶ່ງ ຊຶ່ງໄດ້ຜ່ານການຝຶກອົບຮົມຫຼັກສູດພະນັກງານນໍາທ່ຽວ ແລະ ໄດ້ຮັບອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ໃນການເປັນຜູ້ບໍລິການນໍາທ່ຽວໃນຂອບເຂດພື້ນທີ່ສະເພາະໃດໜຶ່ງ.

**ມາດຕາ 74 (ປັບປຸງ) ມາດຕະຖານ ແລະ ເງື່ອນໄຂຂອງພະນັກງານນໍາທ່ຽວ**

ມາດຕະຖານ ແລະ ເງື່ອນໄຂລວມຂອງ ພະນັກງານນໍາທ່ຽວ ມີ ດັ່ງນີ້:

1. ເປັນພົນລະເມືອງລາວ, ມີອາຍຸແຕ່ ສິບແປດປີ ຂຶ້ນໄປ, ມີພູມລໍາເນົາ ຢູ່ ສປປ ລາວ;
2. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທໍາຜິດໂດຍເຈດຕະນາ;
3. ມີ ຈັນຍາບັນ, ຈັນຍາທໍາ, ຄຸນສົມບັດ, ມະນຸດສໍາພັນດີ ແລະ ມີຄວາມຮັບຜິດຊອບສູງຕໍ່ການບໍລິການນໍາທ່ຽວ;
4. ຈົບຫຼັກສູດ ຫຼື ຜ່ານການຝຶກອົບຮົມ ກ່ຽວກັບວິຊາການດ້ານການນໍາທ່ຽວ ຢູ່ພາຍໃນ ຫຼື ຕ່າງປະເທດ;
5. ມີບັດພະນັກງານນໍາທ່ຽວ ທີ່ອອກໃຫ້ໂດຍຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວຕາມລະບຽບການ;
6. ມີ ຄວາມຮູ້, ຄວາມສາມາດ, ທັກສະທີ່ກ່ຽວຂ້ອງ ເປັນຕົ້ນ ດ້ານພູມສາດ, ປະຫວັດສາດ, ວັດທະນະທໍາ, ຮີດຄອງປະເພນີ ອັນດີງາມຂອງຊາດ, ພາສາຕ່າງປະເທດໃດໜຶ່ງ ລວມທັງການປະຖົມພະຍາບານຂັ້ນພື້ນຖານ;
7. ມີສຸຂະພາບດີ.

ມາດຕະຖານ ແລະ ເງື່ອນໄຂສະເພາະ ຂອງພະນັກງານນໍາທ່ຽວແຕ່ລະລະດັບ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 75 (ໃໝ່) ສິດຂອງພະນັກງານນໍາທ່ຽວ**

ພະນັກງານນໍາທ່ຽວ ມີສິດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໄດ້ຮັບຄ່າແຮງງານ ຫຼື ຄ່າບໍລິການຈາກວິສາຫະກິດບໍລິການນໍາທ່ຽວ ຕາມສັນຍາ ຫຼື ການຕົກລົງ;
2. ນໍາພາຄະນະນັກທ່ອງທ່ຽວພາຍໃນປະເທດ ເດີນທາງໄປທ່ຽວຕ່າງປະເທດ ຕາມການວ່າຈ້າງຂອງວິສາຫະກິດບໍລິການນໍາທ່ຽວ ຕາມລາຍການທ່ອງທ່ຽວທີ່ໄດ້ກໍານົດໄວ້;
3. ກ່າວເຕືອນ ນັກທ່ອງທ່ຽວ ແລະ ຄົນຂັບຍານພາຫະນະຂົນສົ່ງນັກທ່ອງທ່ຽວ ທີ່ມີພຶດຕິກໍາລະເມີດກົດໝາຍ, ວັດທະນະທໍາ, ຮີດຄອງປະເພນີອັນດີງາມ ຫຼື ພຶດຕິກໍາ ບໍ່ສຸພາບຮຽບຮ້ອຍ, ມີຄວາມສ່ຽງຕໍ່ຄວາມເສຍຫາຍ ແລະ ໄພອັນຕະລາຍ;
4. ກ່າວເຕືອນ ຄົນຂັບຍານພາຫະນະຂົນສົ່ງນັກທ່ອງທ່ຽວ ໃຫ້ດໍາເນີນໄປຕາມຕາຕະລາງ ແລະ ສະຖານທີ່ຂອງລາຍການທ່ອງທ່ຽວ ເມື່ອເຫັນວ່າການເດີນທາງ ບໍ່ໄປຕາມແຜນການ;
5. ຢຸດເຊົາ ຫຼື ໂຈະການເດີນທາງ ຫຼື ການທ່ອງທ່ຽວ ເມື່ອເຫັນວ່າ ມີອຸບປະຕິເຫດ, ເຫດການສຸກເສີນເກີດຂຶ້ນ ຫຼື ຄາດຄະເນໄດ້ວ່າອາດມີຄວາມເປັນອັນຕະລາຍ, ຜົນກະທົບຕໍ່ ຊີວິດ, ສຸຂະພາບ, ຊັບສິນຂອງນັກທ່ອງທ່ຽວ ພ້ອມທັງແຈ້ງໃຫ້ວິສາຫະກິດບໍລິການນໍາທ່ຽວ ທີ່ກ່ຽວຂ້ອງ;
6. ຮ້ອງທຸກ ຕໍ່ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເມື່ອເຫັນວ່າຕົນໄດ້ຮັບຄວາມເສຍປະໂຫຍດ;
7. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 76 (ໃໝ່) ພັນທະຂອງພະນັກງານນຳທ່ຽວ**

ພະນັກງານນຳທ່ຽວ ມີພັນທະ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ວັດທະນະທຳ, ຮີດຄອງປະເພນີຂອງທ້ອງຖິ່ນບ່ອນທ່ຽວຊົມ;

2. ແຕ່ງກາຍ, ນຸ່ງຖື ແລະ ເວົ້າຈາສຸພາບຮຽບຮ້ອຍ, ໃຫ້ກຽດ, ເຄົາລົບນັບຖື ນັກທ່ອງທ່ຽວ, ໃຫ້ການຮ່ວມມື, ປະສານງານເປັນຢ່າງດີກັບ ການຈັດຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ບຸກຄົນ ທີ່ກ່ຽວຂ້ອງ;

3. ນຳພານັກທ່ອງທ່ຽວ ທ່ຽວຊົມສະຖານທີ່ທ່ອງທ່ຽວ ພ້ອມທັງໃຫ້ຂໍ້ມູນ ແລະ ອະທິບາຍ ກ່ຽວກັບປະຫວັດຄວາມເປັນມາຂອງສະຖານທີ່ທ່ອງທ່ຽວ;

4. ນຳພາທ່ຽວໄປຕາມລາຍການທ່ອງທ່ຽວ, ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ເປັນຢ່າງອື່ນ ຕາມການເຫັນດີຂອງທັງສອງຝ່າຍ ລະຫວ່າງນັກທ່ອງທ່ຽວ ແລະ ວິສາຫະກິດບໍລິການນຳທ່ຽວ;

5. ນຳພາຄະນະນັກທ່ອງທ່ຽວພາຍໃນປະເທດ ເດີນທາງໄປທ່ຽວຕ່າງປະເທດ ຕາມລາຍການທ່ອງທ່ຽວ ພ້ອມທັງນຳພາຄະນະນັກທ່ອງທ່ຽວດັ່ງກ່າວ ກັບຄືນປະເທດ ຢ່າງຄົບຖ້ວນ ແລະ ປອດໄພ;

6. ໃຫ້ຂໍ້ມູນ, ນຳສະເໜີ ແລະ ອະທິບາຍ ກ່ຽວກັບການເດີນທາງ, ອາຫານ, ສະຖານທີ່ພັກແຮມ, ກິດຈະກຳທ່ອງທ່ຽວ ຫຼື ຜະລິດຕະພັນທ່ອງທ່ຽວ ຢ່າງຖືກຕ້ອງ;

7. ນຳພາ ແລະ ຕິດຕາມນັກທ່ອງທ່ຽວ ເດີນທາງໄປເຖິງຈຸດໝາຍປາຍທາງການທ່ອງທ່ຽວ ແລະ ສົ່ງນັກທ່ອງທ່ຽວກັບຄືນ ຕາມກຳນົດເວລາຂອງລາຍການທ່ອງທ່ຽວ;

8. ຮັບປະກັນຄວາມປອດໄພ, ອຳນວຍຄວາມສະດວກ, ດູແລ ແລະ ໃຫ້ການຊ່ວຍເຫຼືອແກ່ນັກທ່ອງທ່ຽວໃນກໍລະນີຈຳເປັນ ຫຼື ເຈັບປ່ວຍ, ເກີດອຸບປະຕິເຫດ ຫຼື ເຫດການສຸກເສີນອື່ນ ພ້ອມທັງແຈ້ງໃຫ້ ວິສາຫະກິດບໍລິການນຳທ່ຽວ ແລະ ຕຳຫຼວດຄຸ້ມຄອງການທ່ອງທ່ຽວ ຕາມລະບຽບການ;

9. ຕິດບັດນຳທ່ຽວທຸກຄັ້ງ ໃນເວລາປະຕິບັດໜ້າທີ່ນຳທ່ຽວ;

10. ເສຍອາກອນລາຍໄດ້, ຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

11. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 12
## ຜູ້ນຳພາຄະນະນັກທ່ອງທ່ຽວ

**ມາດຕາ 77 (ໃໝ່) ຜູ້ນຳພາຄະນະນັກທ່ອງທ່ຽວ**

ຜູ້ນຳພາຄະນະນັກທ່ອງທ່ຽວ (Tour Leader) ແມ່ນ ບຸກຄົນ ທີ່ຮ່ວມເດີນທາງ ແລະ ນຳພາ ນັກທ່ອງທ່ຽວຕ່າງປະເທດ ເຂົ້າມາທ່ຽວ ສປປ ລາວ ເພື່ອຊ່ວຍອຳນວຍຄວາມສະດວກ, ຊີ້ແຈງ, ແປພາສາ ລວມທັງປະສານສົມທົບກັບພະນັກງານນຳທ່ຽວ ໃນການພາໄປທ່ຽວຊົມສະຖານທີ່ທ່ອງທ່ຽວຕາມລາຍການທ່ອງທ່ຽວ.

ຜູ້ນຳພາຄະນະນັກທ່ອງທ່ຽວ ຕ້ອງສາມາດສື່ສານພາສາອັງກິດ, ພາສາລາວ ຫຼື ພາສາອື່ນ ທີ່ສື່ສານກັບພະນັກງານນຳທ່ຽວ ໄດ້ໃນລະດັບທີ່ແນ່ນອນ ພ້ອມທັງໄດ້ຮັບການແຕ່ງຕັ້ງ ແລະ ຢັ້ງຢືນ ເປັນລາຍລັກອັກສອນຈາກວິສາຫະກິດບໍລິການນຳທ່ຽວ ທີ່ກ່ຽວຂ້ອງ.

**ມາດຕາ 78 (ໃໝ່) ສິດ ຂອງຜູ້ນຳພາຄະນະນັກທ່ອງທ່ຽວ**

ຜູ້ນຳພາຄະນະນັກທ່ອງທ່ຽວ ມີສິດ ດັ່ງນີ້:

1. ນຳພາ, ຕິດຕາມ ແລະ ອຳນວຍຄວາມສະດວກໃຫ້ແກ່ຄະນະນັກທ່ອງທ່ຽວ;

2. ກ່າວເຕືອນ ນັກທ່ອງທ່ຽວ ທີ່ມີພຶດຕິກຳລະເມີດກົດໝາຍ, ວັດທະນະທຳ, ຮີດຄອງປະເພນີອັນດີງາມ ຫຼື ພຶດຕິກຳ ບໍ່ສຸພາບຮຽບຮ້ອຍ, ມີຄວາມສ່ຽງຕໍ່ຄວາມເສຍຫາຍ ແລະ ໄພອັນຕະລາຍ;

3. ສະເໜີ ໃຫ້ພະນັກງານນຳທ່ຽວ ຢຸດເຊົາ ຫຼື ໂຈະ ການເດີນທາງ ຫຼື ການທ່ອງທ່ຽວ ເມື່ອເຫັນວ່າມີອຸບປະຕິເຫດ, ເຫດການສຸກເສີນເກີດຂຶ້ນກະທັນຫັນ ຫຼື ຄາດຄະເນໄດ້ວ່າອາດມີຄວາມເປັນອັນຕະລາຍ, ຜົນກະທົບຕໍ່ ຊີວິດ, ສຸຂະພາບ ແລະ ຊັບສິນຂອງນັກທ່ອງທ່ຽວ;

4. ຮ້ອງທຸກ ຕໍ່ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເມື່ອເຫັນວ່າຕົນໄດ້ຮັບຄວາມອັບປະໂຫຍດ;

5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 79 (ໃໝ່) ພັນທະ ຂອງຜູ້ນຳພາຄະນະນັກທ່ອງທ່ຽວ

ຜູ້ນຳພາຄະນະນັກທ່ອງທ່ຽວ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງທ້ອງຖິ່ນບ່ອນທ່ຽວຊົມ;

2. ແຕ່ງກາຍ, ນຸ່ງຖື ແລະ ເວົ້າຈາ ສຸພາບຮຽບຮ້ອຍ, ໃຫ້ກຽດ, ເຄົາລົບນັບຖື ຄະນະນັກທ່ອງທ່ຽວ, ໃຫ້ການຮ່ວມມື, ປະສານງານເປັນຢ່າງດີ ກັບການຈັດຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ບຸກຄົນ ທີ່ກ່ຽວຂ້ອງ;

3. ນຳພາ ແລະ ຕິດຕາມ ນັກທ່ອງທ່ຽວ ເດີນທາງໄປເຖິງຈຸດໝາຍປາຍທາງ ແລະ ກັບຄືນປະເທດຕາມກຳນົດເວລາຂອງລາຍການທ່ອງທ່ຽວ;

4. ຮັບປະກັນຄວາມປອດໄພ, ອຳນວຍຄວາມສະດວກ, ດູແລ ແລະ ໃຫ້ການຊ່ວຍເຫຼືອແກ່ຄະນະນັກທ່ອງທ່ຽວໃນກໍລະນີຈຳເປັນ ຫຼື ເຈັບປ່ວຍ, ເກີດອຸບປະຕິເຫດ ຫຼື ເຫດການສຸກເສີນອື່ນ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ IV
## ນັກທ່ອງທ່ຽວ ແລະ ການເຂົ້າ-ອອກ ສປປ ລາວ
## ໝວດທີ 1
## ນັກທ່ອງທ່ຽວ

### ມາດຕາ 80 (ໃໝ່) ນັກທ່ອງທ່ຽວ

ນັກທ່ອງທ່ຽວ ແມ່ນ ບຸກຄົນ ທີ່ເດີນທາງຈາກທີ່ຢູ່ອາໄສຂອງຕົນໄປທ້ອງຖິ່ນອື່ນ ຫຼື ປະເທດອື່ນ ເພື່ອການທ່ອງທ່ຽວ, ການຢ້ຽມຢາມ, ການທ່ຽວຊົມ, ການພັກຜ່ອນ, ການມ່ວນຊື່ນ, ການແລກປ່ຽນວັດທະນະທຳ, ການກິລາ, ການສົ່ງເສີມສຸຂະພາບ, ການສຶກສາຄົ້ນຄວ້າ, ການວາງສະແດງ, ການປະຊຸມ, ການສະແຫວງບຸນ ແລະ ກິດຈະກຳອື່ນ ໂດຍບໍ່ມີຈຸດປະສົງອາໄສຢູ່ປະຈຳ, ຊອກເຮັດວຽກ, ປະກອບອາຊີບ ເພື່ອຫາລາຍໄດ້ໃນຮູບແບບຕ່າງໆ.

### ມາດຕາ 81 (ປັບປຸງ) ປະເພດນັກທ່ອງທ່ຽວ

ນັກທ່ອງທ່ຽວ ມີ ສອງປະເພດ ດັ່ງນີ້:

1. ນັກທ່ອງທ່ຽວພາຍໃນ;
2. ນັກທ່ອງທ່ຽວຕ່າງປະເທດ.

**ມາດຕາ 82 ນັກທ່ອງທ່ຽວພາຍໃນ**

ນັກທ່ອງທ່ຽວພາຍໃນ ແມ່ນ ນັກທ່ອງທ່ຽວທີ່ ເປັນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຫຼື ຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ຊຶ່ງເດີນທາງທ່ອງທ່ຽວພາຍໃນປະເທດ.

**ມາດຕາ 83 (ປັບປຸງ) ນັກທ່ອງທ່ຽວຕ່າງປະເທດ**

ນັກທ່ອງທ່ຽວຕ່າງປະເທດ ແມ່ນ ນັກທ່ອງທ່ຽວທີ່ເປັນ ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ, ຄົນລາວທີ່ດໍາລົງຊີວິດຢູ່ຕ່າງປະເທດ ຊຶ່ງເດີນທາງເຂົ້າມາທ່ອງທ່ຽວ ຢູ່ ສປປ ລາວ.

**ມາດຕາ 84 (ປັບປຸງ) ສິດຂອງນັກທ່ອງທ່ຽວ**

ນັກທ່ອງທ່ຽວ ມີສິດ ດັ່ງນີ້:

1. ທ່ອງທ່ຽວ ໂດຍຜ່ານການບໍລິການຂອງວິສາຫະກິດບໍລິການນໍາທ່ຽວໃດໜຶ່ງ ຫຼື ທ່ອງທ່ຽວ ດ້ວຍຕົນເອງ;

2. ເລືອກການບໍລິການຄົບວົງຈອນ ຫຼື ສ່ວນໃດສ່ວນໜຶ່ງ ໂດຍກົງ ຈາກວິສາຫະກິດບໍລິການນໍາທ່ຽວ ຫຼື ຜ່ານວິສາຫະກິດຕົວແທນການທ່ອງທ່ຽວ;

3. ໄດ້ຮັບຄວາມສະດວກ ໃນການເຂົ້າ-ອອກ ສປປ ລາວ ແລະ ການເດີນທາງທ່ອງທ່ຽວ;

4. ໄດ້ຮັບອະນຸຍາດ ແລະ ຍົກເວັ້ນພາສີ ສໍາລັບສິ່ງຂອງຕິດຕົວທີ່ຈໍາເປັນ ທີ່ນໍາເຂົ້າ ແລະ ນໍາອອກ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

5. ຮ້ອງທຸກຕໍ່ການກະທໍາທີ່ບໍ່ຖືກຕ້ອງ ຂອງວິສາຫະກິດບໍລິການນໍາທ່ຽວ, ພະນັກງານນໍາທ່ຽວ, ເຈົ້າໜ້າທີ່, ການຈັດຕັ້ງ ແລະ ບຸກຄົນອື່ນ ທີ່ກ່ຽວຂ້ອງ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຕົນ;

6. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 85 (ປັບປຸງ) ພັນທະຂອງນັກທ່ອງທ່ຽວ**

ນັກທ່ອງທ່ຽວ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ວັດທະນະທໍາ, ຮີດຄອງປະເພນີຂອງທ້ອງຖິ່ນບ່ອນທ່ຽວຊົມ;

2. ຊໍາລະ ຄ່າໃຊ້ບໍລິການ, ຄ່າສິນຄ້າ, ຄ່າທໍານຽມ ແລະ ຄ່າບໍລິການອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ປະຕິບັດຕາມ ແຜນການ, ຕາຕະລາງ ແລະ ລາຍການນໍາທ່ຽວ ຢ່າງເຂັ້ມງວດ;

4. ປົກປັກຮັກສາ ສະຖານທີ່ທ່ອງທ່ຽວ, ສິ່ງແວດລ້ອມ ທໍາມະຊາດ ແລະ ສັງຄົມ;

5. ລາຍງານເຈົ້າໜ້າທີ່ ເມື່ອພົບເຫັນປາກົດການຫຍໍ້ທໍ້, ອຸບປະຕິເຫດ, ເຫດການສຸກເສີນ ຊຶ່ງອາດມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ;

6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 2
## ການເຂົ້າ-ອອກ ສປປ ລາວ ຂອງນັກທ່ອງທ່ຽວ

**ມາດຕາ 86 (ປັບປຸງ) ການອະນຸຍາດເຂົ້າ-ອອກ ສປປ ລາວ**

ນັກທ່ອງທ່ຽວ ທີ່ເດີນທາງ ເຂົ້າ-ອອກ ສປປ ລາວ ຕ້ອງມີເງື່ອນໄຂ ແລະ ປະຕິບັດຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ ກ່ຽວກັບການ ເຂົ້າ-ອອກ ສປປ ລາວ ຢ່າງເຂັ້ມງວດ.

ເຈົ້າໜ້າທີ່ຮັບຜິດຊອບທີ່ກ່ຽວຂ້ອງ ຕ້ອງອຳນວຍຄວາມສະດວກ, ບໍລິການ ຢ່າງກະທັດຮັດ ແລະ ວ່ອງໄວ ໃນການອະນຸຍາດ ເຂົ້າ-ອອກ ໃຫ້ແກ່ນັກທ່ອງທ່ຽວ.

**ມາດຕາ 87 (ປັບປຸງ) ດ່ານເຂົ້າ-ອອກ ສປປ ລາວ**

ນັກທ່ອງທ່ຽວທີ່ເດີນທາງ ເຂົ້າ-ອອກ ສປປ ລາວ ຕ້ອງເຂົ້າ-ອອກ ຕາມດ່ານ ທີ່ໄດ້ກຳນົດໄວ້.

ເຈົ້າໜ້າທີ່ຮັບຜິດຊອບຢູ່ຕາມດ່ານ ຕ້ອງຄຸ້ມຄອງ ກວດກາ, ປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ, ຈັດສັນສະຖານທີ່ໃຫ້ເໝາະສົມ ເພື່ອອຳນວຍຄວາມສະດວກ, ບໍລິການວ່ອງໄວ, ຮັບໃຊ້ດ້ວຍອັດທະຍາໄສໄມຕີ ອັນດີໃຫ້ແກ່ນັກທ່ອງທ່ຽວທີ່ເຂົ້າ ແລະ ອອກປະເທດ.

**ມາດຕາ 88 ການເດີນທາງພາຍໃນປະເທດ**

ນັກທ່ອງທ່ຽວ ທີ່ເດີນທາງເຂົ້າມາ ສປປ ລາວ ສາມາດເດີນທາງໄປທ່ອງທ່ຽວ ຢູ່ສະຖານທີ່ທ່ອງທ່ຽວ ແຫ່ງຕ່າງໆ ພາຍໃນປະເທດ ຕາມລະບຽບການ.

ທຸກພາກສ່ວນທີ່ກ່ຽວຂ້ອງ ຕ້ອງອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ທີ່ເດີນທາງທ່ອງທ່ຽວຢູ່ ພາຍໃນປະເທດ, ປັບປຸງແກ້ໄຂລະບຽບການທີ່ບໍ່ສອດຄ່ອງ ຊຶ່ງສ້າງຄວາມຫຍຸ້ງຍາກ ໃຫ້ແກ່ນັກທ່ອງທ່ຽວໃນ ການເດີນທາງ ແລະ ທ່ຽວຊົມສະຖານທີ່ທ່ອງທ່ຽວຕ່າງໆ.

## ພາກທີ V
## ການພັດທະນາການທ່ອງທ່ຽວ
## ໝວດທີ 1
## ແຜນພັດທະນາການທ່ອງທ່ຽວ

**ມາດຕາ 89 (ປັບປຸງ) ລະດັບແຜນພັດທະນາການທ່ອງທ່ຽວ**

ແຜນພັດທະນາການທ່ອງທ່ຽວ ມີແຜນໄລຍະ ຍາວ, ກາງ ແລະ ສັ້ນ ຊຶ່ງຈັດລະດັບ ດັ່ງນີ້:

1. ແຜນພັດທະນາການທ່ອງທ່ຽວແຫ່ງຊາດ;
2. ແຜນພັດທະນາການທ່ອງທ່ຽວລະດັບພາກ;
3. ແຜນພັດທະນາການທ່ອງທ່ຽວລະດັບແຂວງ;
4. ແຜນພັດທະນາການທ່ອງທ່ຽວລະດັບເມືອງ;
5. ແຜນພັດທະນາການທ່ອງທ່ຽວລະດັບບ້ານ.

ການສ້າງ, ການຄຸ້ມຄອງ ແລະ ການປະຕິບັດແຜນພັດທະນາການທ່ອງທ່ຽວແຕ່ລະລະດັບ ໄດ້ກຳນົດໄວ້ ໃນລະບຽບການຕ່າງຫາກ.

**ມາດຕາ 90 (ປັບປຸງ) ຫຼັກການການສ້າງແຜນພັດທະນາການທ່ອງທ່ຽວ**

ການສ້າງແຜນພັດທະນາການທ່ອງທ່ຽວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ອີງໃສ່ທ່າແຮງບົ່ມຊ້ອນ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຂອງທ້ອງຖິ່ນ;

2. ດຳເນີນຕາມທິດການທ່ອງທ່ຽວ ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ໂດຍມີສ່ວນຮ່ວມ ແລະ ຜົນປະໂຫຍດ ຂອງສັງຄົມ;

3. ຮັບປະກັນ ລັກສະນະຍືນຍົງ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;

4. ສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ກ່ຽວກັບວຽກງານທ່ອງທ່ຽວ ແລະ ການມີສ່ວນຮ່ວມຂອງທ້ອງຖິ່ນ;

5. ຊຸກຍູ້ ແລະ ສົ່ງເສີມການຜະລິດພາຍໃນ ເພື່ອຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ;

6. ສົ່ງເສີມການທ່ອງທ່ຽວພາຍໃນ ໄປຄຽງຄູ່ກັບການທ່ອງທ່ຽວຕ່າງປະເທດ, ພາກພື້ນ ແລະ ສາກົນ;

7. ເລັ່ງໃສ່ເຂດເປົ້າໝາຍທີ່ໂດດເດັ່ນ ລວມທັງການສ້າງຜະລິດຕະພັນທ່ອງທ່ຽວໃໝ່ ທີ່ມີຄວາມສາມາດ ແຂ່ງຂັນໃນລະດັບ ພາກພື້ນ ແລະ ສາກົນ;

8. ພັດທະນາ, ສ້າງສິ່ງ ອຳນວຍຄວາມສະດວກ ແລະ ບຸກຄະລາກອນດ້ານການທ່ອງທ່ຽວ.

**ມາດຕາ 91 (ປັບປຸງ) ເນື້ອໃນແຜນພັດທະນາການທ່ອງທ່ຽວ**

ແຜນພັດທະນາການທ່ອງທ່ຽວ ຕ້ອງກຳນົດເນື້ອໃນສຳຄັນ, ຈຸດປະສົງ, ຄາດໝາຍ, ເປົ້າໝາຍພັດທະນາ, ການປະເມີນ ແລະ ວິເຄາະທ່າແຮງບົ່ມຊ້ອນ, ສະພາບຕະຫຼາດການທ່ອງທ່ຽວ, ຜົນໄດ້ຮັບ, ຜົນກະທົບຕໍ່ເສດຖະກິດ, ວັດທະນະທຳ ແລະ ສິ່ງແວດລ້ອມ ພ້ອມທັງກຳນົດ ວິທີການ, ມາດຕະການ, ລະບຽບການ ແລະ ແຫຼ່ງທຶນໃນການຈັດຕັ້ງປະຕິບັດ.

## ໝວດທີ 2
## ການພັດທະນາແຫຼ່ງທ່ອງທ່ຽວ

**ມາດຕາ 92 (ໃໝ່) ການພັດທະນາແຫຼ່ງທ່ອງທ່ຽວ**

ການພັດທະນາແຫຼ່ງທ່ອງທ່ຽວ ແມ່ນ ການພັດທະນາຊັບພະຍາກອນທ່ອງທ່ຽວ ທີ່ໄດ້ຮັບການສຳຫຼວດ ແລະ ຂຶ້ນທະບຽນ ໃຫ້ເປັນສະຖານທີ່ທ່ອງທ່ຽວ ເພື່ອສະໜອງການບໍລິການ ແລະ ດຶງດູດນັກທ່ອງທ່ຽວ ໃຫ້ມາທ່ຽວຊົມ, ຢ້ຽມຢາມ, ສຶກສາຄົ້ນຄວ້າ, ພັກຜ່ອນ ແລະ ມ່ວນຊື່ນ.

**ມາດຕາ 93 (ປັບປຸງ) ຂັ້ນຕອນການພັດທະນາແຫຼ່ງທ່ອງທ່ຽວ**

ຂັ້ນຕອນການພັດທະນາແຫຼ່ງທ່ອງທ່ຽວ ມີ ດັ່ງນີ້:

1. ການສຳຫຼວດ;
2. ການວາງແຜນພັດທະນາ;
3. ການແບ່ງເຂດ;
4. ການສ້າງບົດວິພາກເສດຖະກິດ-ເຕັກນິກ ແລະ ການປະເມີນຜົນກະທົບດ້ານສິ່ງແວດລ້ອມ;
5. ການເຮັດສັນຍາສຳປະທານພັດທະນາແຫຼ່ງທ່ອງທ່ຽວ;
6. ການອອກແບບ;
7. ການຈັດຕັ້ງປະຕິບັດການພັດທະນາແຫຼ່ງທ່ອງທ່ຽວ.

ການພັດທະນາແຫຼ່ງທ່ອງທ່ຽວແຕ່ລະຂັ້ນຕອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ເມືອງທ່ອງທ່ຽວ

**ມາດຕາ 94 (ປັບປຸງ) ເງື່ອນໄຂເປັນເມືອງທ່ອງທ່ຽວ**

ເງື່ອນໄຂເປັນເມືອງທ່ອງທ່ຽວ ມີ ດັ່ງນີ້:

1. ເປັນເມືອງທີ່ຄົນນິຍົມໄປທ່ຽວຊົມ ຢ່າງຫຼວງຫຼາຍ;
2. ມີຊັບພະຍາກອນທ່ອງທ່ຽວທາງດ້ານ ທໍາມະຊາດ, ວັດທະນະທໍາ ຫຼື ປະຫວັດສາດ ຢູ່ພາຍໃນ ຫຼື ບໍລິເວນນອກຕົວເມືອງ ທີ່ດຶງດູດນັກທ່ອງທ່ຽວ;
3. ມີຄວາມເປັນລະບຽບຮຽບຮ້ອຍ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມສະອາດ;
4. ມີໂຄງລ່າງພື້ນຖານ ແລະ ສາມາດພັດທະນາໃນຂັ້ນຕໍ່ໄປ;
5. ຖືເອົາທຸລະກິດການທ່ອງທ່ຽວ ເປັນພາກສ່ວນສໍາຄັນ ໃນໂຄງປະກອບເສດຖະກິດຂອງເມືອງ ຊຶ່ງລາຍຮັບສ່ວນຫຼາຍໄດ້ມາຈາກການທ່ອງທ່ຽວ.

ການຮັບຮອງ ແລະ ການປະກາດເປັນເມືອງທ່ອງທ່ຽວ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 95 ການພັດທະນາເມືອງທ່ອງທ່ຽວ**

ການພັດທະນາເມືອງທ່ອງທ່ຽວ ຕ້ອງເລັ່ງໃສ່ການສົ່ງເສີມການລົງທຶນ, ການສ້າງໂຄງລ່າງພື້ນຖານ, ສິ່ງອໍານວຍຄວາມສະດວກ, ການພັດທະນາຊັບພະຍາກອນມະນຸດ, ສ້າງຈິດສໍານຶກກ່ຽວກັບການທ່ອງທ່ຽວໃຫ້ພົນລະເມືອງ ແລະ ການນໍາໃຊ້ທີ່ດິນ, ການພັດທະນາຕົວເມືອງໃຫ້ມີຄວາມສະອາດ, ສວຍງາມ, ເປັນລະບຽບຮຽບຮ້ອຍ ເພື່ອດຶງດູດນັກທ່ອງທ່ຽວ.

ການພັດທະນາເສດຖະກິດ-ສັງຄົມ ຂອງເມືອງທ່ອງທ່ຽວ ຕ້ອງຖືເອົາການທ່ອງທ່ຽວເປັນບຸລິມະສິດອັນດັບໜຶ່ງ.

**ມາດຕາ 96 ການຄຸ້ມຄອງເມືອງທ່ອງທ່ຽວ**

ເມືອງທ່ອງທ່ຽວ ຕ້ອງມີລະບຽບການຄຸ້ມຄອງສະເພາະ ເພື່ອປົກປັກຮັກສາ, ອະນຸລັກ ແລະ ພັດທະນາ ຊັບພະຍາກອນທ່ອງທ່ຽວທາງດ້ານທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດ.

## ພາກທີ VI
## ກອງທຶນການທ່ອງທ່ຽວ

**ມາດຕາ 97 (ປັບປຸງ) ກອງທຶນການທ່ອງທ່ຽວ**

ກອງທຶນການທ່ອງທ່ຽວ ແມ່ນ ກອງທຶນຂອງລັດທີ່ສ້າງຕັ້ງຂຶ້ນ ເພື່ອສະສົມ ແລະ ລະດົມທຶນ ນໍາໃຊ້ເຂົ້າໃນການ ພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງການທ່ອງທ່ຽວ ເປັນຕົ້ນ ການພັດທະນາສິ່ງອໍານວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວ, ລະບົບຖານຂໍ້ມູນກ່ຽວກັບການທ່ອງທ່ຽວ, ການສ້າງລະບຽບການ, ການໂຄສະນາການທ່ອງທ່ຽວ ແລະ ການຝຶກອົບຮົມພະນັກງານວິຊາການທ່ອງທ່ຽວ.

**ມາດຕາ 98 (ປັບປຸງ) ແຫຼ່ງກອງທຶນການທ່ອງທ່ຽວ**

ກອງທຶນການທ່ອງທ່ຽວ ໄດ້ມາຈາກ:

1. ງົບປະມານຂອງລັດ;

2. ພົນທະຈາກນັກທ່ອງທ່ຽວພາຍໃນທີ່ເດີນທາງໄປຕ່າງປະເທດ ແລະ ນັກທ່ອງທ່ຽວຕ່າງປະເທດເດີນທາງ ເຂົ້າມາ ສປປ ລາວ;

3. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

4. ການເຄື່ອນໄຫວກິດຈະກຳກ່ຽວກັບການທ່ອງທ່ຽວ ເປັນຕົ້ນ ເທດສະການອາຫານ, ງານວາງສະແດງການທ່ອງທ່ຽວ;

5. ລາຍໄດ້ອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 99 (ປັບປຸງ) ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນການທ່ອງທ່ຽວ**

ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນການທ່ອງທ່ຽວ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນການທ່ອງທ່ຽວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VII
## ທຸລະກິດການທ່ອງທ່ຽວ

**ມາດຕາ 100 (ໃໝ່) ການຂໍອະນຸຍາດດຳເນີນທຸລະກິດການທ່ອງທ່ຽວ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດການທ່ອງທ່ຽວ ທີ່ຢູ່ໃນບັນຊີຄວບຄຸມ ຕ້ອງຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດລົງທຶນນຳຂະແໜງການແຜນການ ແລະ ການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ພາຍຫຼັງໄດ້ຮັບທະບຽນວິສາຫະກິດ ແລະ ໃບອະນຸຍາດລົງທຶນແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍທາງກົງ ຫຼື ທາງເອເລັກໂຕຣນິກ.

ການດຳເນີນທຸລະກິດກ່ຽວກັບການທ່ອງທ່ຽວ ທີ່ບໍ່ຢູ່ໃນບັນຊີຄວບຄຸມ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ການດຳເນີນທຸລະກິດສະຖານທີ່ທ່ອງທ່ຽວ ຫຼື ກິດຈະການທ່ອງທ່ຽວ ຢູ່ໃນເຂດປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດນັ້ນ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອອະນຸຍາດໃຫ້ດຳເນີນທຸລະກິດຕາມກົດໝາຍສະບັບນີ້.

ສຳລັບການດຳເນີນທຸລະກິດການທ່ອງທ່ຽວ ໃນເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ ນັ້ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ການຂໍອະນຸຍາດດຳເນີນທຸລະກິດການທ່ອງທ່ຽວທາງເອເລັກໂຕຣນິກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 101 (ປັບປຸງ) ທຸລະກິດການທ່ອງທ່ຽວ**

ທຸລະກິດການທ່ອງທ່ຽວ ປະກອບດ້ວຍ:

1. ທຸລະກິດສະຖານທີ່ທ່ອງທ່ຽວ;
2. ທຸລະກິດສະຖານທີ່ພັກແຮມ;
3. ທຸລະກິດຮ້ານອາຫານ;
4. ທຸລະກິດບັນເທີງ;

5. ທຸລະກິດບໍລິການສົ່ງເສີມສຸຂະພາບ;
6. ທຸລະກິດເຄື່ອງທີ່ລະນຶກ;
7. ທຸລະກິດບໍລິການນຳທ່ຽວ;
8. ທຸລະກິດຕົວແທນການທ່ອງທ່ຽວ;
9. ທຸລະກິດການທ່ອງທ່ຽວອື່ນ.

**ມາດຕາ 102 (ໃໝ່) ເງື່ອນໄຂການຂໍດຳເນີນທຸລະກິດ**

ການຂໍດຳເນີນທຸລະກິດການທ່ອງທ່ຽວ ມີເງື່ອນໄຂ ດັ່ງນີ້:

1. ໄດ້ຂຶ້ນທະບຽນວິສາຫະກິດ ຫຼື ອະນຸຍາດລົງທຶນ ຢ່າງຖືກຕ້ອງຕາມກົດໝາຍ;
2. ມີທຶນຈົດທະບຽນເໝາະສົມຕາມປະເພດ ແລະ ຂະໜາດ ຂອງທຸລະກິດ;
3. ມີທີ່ຕັ້ງສຳນັກງານ;
4. ມີເງື່ອນໄຂອື່ນຕາມແຕ່ລະປະເພດທຸລະກິດ.

**ມາດຕາ 103 (ໃໝ່) ເອກະສານປະກອບການຂໍດຳເນີນທຸລະກິດ**

ເອກະສານປະກອບການຂໍດຳເນີນທຸລະກິດການທ່ອງທ່ຽວ ມີ ດັ່ງນີ້:

ກ. ເອກະສານປະກອບ ສຳລັບກິດຈະການທົ່ວໄປ:

1. ຄຳຮ້ອງຂໍດຳເນີນທຸລະກິດ ຕາມແບບພິມ ທີ່ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ;
3. ເອກະສານອື່ນ ຕາມຊຸດເອກະສານ ຂອງແຕ່ລະປະເພດທຸລະກິດ.

ຂ. ເອກະສານປະກອບ ສຳລັບກິດຈະການສຳປະທານ:

1. ເອກະສານຕາມ ຂໍ້ ກ 1, 2 ຂອງມາດຕານີ້;
2. ບົດວິພາກເສດຖະກິດ-ເຕັກນິກ;
3. ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ;
4. ສັນຍາສຳປະທານ.

**ມາດຕາ 104 (ໃໝ່) ການພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດການທ່ອງທ່ຽວ ພາຍໃນເວລາ ເຈັດວັນ ລັດຖະການ ສຳລັບກິດຈະການທົ່ວໄປ ແລະ ພາຍໃນ ສິບຫ້າວັນລັດຖະການ ສຳລັບກິດຈະການສຳປະທານ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຖືກຕ້ອງ ແລະຄົບຖ້ວນ ເປັນຕົ້ນໄປ ໂດຍປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດການທ່ອງທ່ຽວໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນກຳນົດເວລາດັ່ງກ່າວ.

**ມາດຕາ 105 (ໃໝ່) ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດການທ່ອງທ່ຽວ ມີອາຍຸການນຳໃຊ້ຕາມແຕ່ລະປະເພດທຸລະກິດ ແລະ ສາມາດຕໍ່ໄດ້ ຕາມລະບຽບການທີ່ກ່ຽວຂ້ອງ.

ໃບອະນຸຍາດດຳເນີນທຸລະກິດ ບໍ່ສາມາດ ໂອນ ຫຼື ມອບໃຫ້ບຸກຄົນອື່ນນຳໃຊ້.

**ມາດຕາ 106 (ປັບປຸງ) ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດ ການທ່ອງທ່ຽວ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຕາມ ການອະນຸຍາດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ໄດ້ຮັບ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານທ່ອງທ່ຽວ;
3. ເກັບຄ່າບໍລິການ ຖືກຕ້ອງຕາມຄວາມເປັນຈິງ;
4. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
5. ເປັນເຈົ້າກຳມະສິດຕໍ່ ຊັບສິນ, ສິ່ງກໍ່ສ້າງ ແລະ ວັດຖຸປະກອນ ຮັບໃຊ້ໃນກິດຈະການຂອງຕົນ;
6. ໄດ້ຮັບໝາກຜົນຈາກການດຳເນີນທຸລະກິດ, ໂອນ, ນຳໃຊ້, ຊື້ ຂາຍ ຊັບສິນຂອງຕົນ;
7. ປະກອບສ່ວນ ທາງດ້ານທຶນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານທ່ອງທ່ຽວ;
8. ໃຫ້ການຮ່ວມມື, ສະໜອງ ຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ອົງການຄຸ້ມຄອງວຽກງານທ່ອງທ່ຽວ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
9. ເຂົ້າເປັນສະມາຊິກ ຂອງສະມາຄົມທຸລະກິດການທ່ອງທ່ຽວ;
10. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະທາງດ້ານການເງິນອື່ນ ຕາມກົດໝາຍ;
11. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ເມື່ອເຫັນວ່າຕົນໄດ້ຮັບຄວາມເສັຍປະໂຫຍດ;
12. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 107 (ໃໝ່) ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດການທ່ອງທ່ຽວຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ມີການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ໃນກໍລະນີ ຜູ້ດຳເນີນທຸລະກິດ ບໍ່ແກ້ໄຂ ຫຼື ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສັ່ງໂຈະການດຳເນີນທຸລະກິດ.

**ມາດຕາ 108 (ໃໝ່) ການຖອນໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດການທ່ອງທ່ຽວຈະຖືກຖອນ ໃນກໍລະນີ ດັ່ງນີ້:

1. ບໍ່ແກ້ໄຂ ຫຼື ປັບປຸງ ຕາມຄຳສັ່ງໂຈະ;
2. ມີການລະເມີດກົດໝາຍ ແລະ ລະບຽບການ ຢ່າງຮ້າຍແຮງ.

ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນທຸລະກິດແລ້ວ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

**ມາດຕາ 109 (ໃໝ່) ກິດຈະການ ແລະ ວິຊາຊີບ ທີ່ສະຫງວນ**

ກິດຈະການ ທີ່ສະຫງວນໃຫ້ສະເພາະຄົນລາວ ມີ ການຜະລິດ ຜະລິດຕະພັນ ຫຼື ສິນຄ້າ ທີ່ເປັນເຄື່ອງທີ່ລະນຶກຂອງລາວ, ທຸລະກິດບໍລິການນຳທ່ຽວພາຍໃນປະເທດ ແລະ ໃນພື້ນທີ່ສະເພາະໃດໜຶ່ງ, ເຮືອນພັກ, ຫ້ອງພັກ, ຮ້ານອາຫານຂະໜາດນ້ອຍ ແລະ ກິດຈະການອື່ນ ຕາມການກຳນົດຂອງລັດຖະບານໃນແຕ່ລະໄລຍະ.

ວິຊາຊີບ ທີ່ສະຫງວນໃຫ້ສະເພາະຄົນລາວ ມີ ອາຊີບພະນັກງານນຳທ່ຽວ ແລະ ວິຊາຊີບອື່ນ ຕາມການກຳນົດຂອງລັດຖະບານໃນແຕ່ລະໄລຍະ.

# ພາກທີ VIII
# ສະມາຄົມທຸລະກິດການທ່ອງທ່ຽວ ແລະ ສະພາສົ່ງເສີມຕະຫຼາດການທ່ອງທ່ຽວລາວ

**ມາດຕາ 110 (ປັບປຸງ) ສະມາຄົມທຸລະກິດການທ່ອງທ່ຽວ**

ສະມາຄົມທຸລະກິດການທ່ອງທ່ຽວ ແມ່ນ ອົງການຈັດຕັ້ງສັງຄົມ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ແລະ ເຄື່ອນໄຫວ ໂດຍບໍ່ຫວັງຜົນກຳໄລ ເພື່ອເຕົ້າໂຮມຫົວໜ່ວຍທຸລະກິດການທ່ອງທ່ຽວ, ມີພາລະບົດບາດ ປະສານສົມທົບກັບ ອົງການຄຸ້ມຄອງວຽກງານທ່ອງທ່ຽວ, ໃຫ້ການ ຊ່ວຍເຫຼືອ, ການປຶກສາ, ແນະນຳ, ແລກປ່ຽນບົດຮຽນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຄົມ ແລະ ສະມາຊິກສະມາຄົມ.

ສະມາຄົມທຸລະກິດການທ່ອງທ່ຽວ ຕ້ອງເຄື່ອນໄຫວບົນຫຼັກການ ແລະ ລະບຽບການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 111 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະມາຄົມທຸລະກິດການທ່ອງທ່ຽວ**

ສະມາຄົມທຸລະກິດການທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງກົດລະບຽບຂອງຕົນ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທ່ອງທ່ຽວ ໃຫ້ສະມາຊິກຕົນ ແລະ ມວນຊົນ ເຊື່ອມຊຶມ, ຮັບຮູ້ຢ່າງກວ້າງຂວາງ, ເປັນເອກະພາບໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;

2. ສ້າງ ແລະ ປັບປຸງການຈັດຕັ້ງຂອງຕົນໃຫ້ເຕີບໃຫຍ່ ເຂັ້ມແຂງ, ນຳໃຊ້ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການເຄື່ອນໄຫວວຽກງານທ່ອງທ່ຽວ;

3. ຊຸກຍູ້ ຫົວໜ່ວຍທຸລະກິດການທ່ອງທ່ຽວ ເຂົ້າເປັນສະມາຊິກຕົນ;

4. ຊ່ວຍເຫຼືອ ແລະ ສົ່ງເສີມສະມາຊິກໃນການປະກອບອາຊີບ ໃຫ້ຈະເລີນກ້າວໜ້າ, ຄຸ້ມຄອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ ຕາມກົດໝາຍ;

5. ເປັນຕົວແທນໃຫ້ຜູ້ດຳເນີນທຸລະກິດການທ່ອງທ່ຽວ ໃນການພົວພັນຮ່ວມມື, ເຂົ້າຮ່ວມກອງປະຊຸມ, ສະເໜີຄຳເຫັນຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກ່ຽວກັບວຽກງານທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ;

6. ຕິດຕາມການເຄື່ອນໄຫວ, ໃຫ້ຄຳແນະນຳ ແລະ ແກ້ໄຂຂໍ້ຂັດແຍ່ງຂອງບັນດາສະມາຊິກ ໃນການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ສະໜອງ ຂໍ້ມູນ ຂ່າວສານ ໃຫ້ສະມາຊິກຕົນ ກ່ຽວກັບການທ່ອງທ່ຽວ, ຕະຫຼາດການທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ;

8. ໃຫ້ການຮ່ວມມື, ປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອປຶກສາຫາລື, ແລກປ່ຽນຄຳຄິດ ຄຳເຫັນ ກ່ຽວກັບການພັດທະນາ, ການໂຄສະນາ ແລະ ການຄຸ້ມຄອງ ການທ່ອງທ່ຽວ;

9. ຈັດຕັ້ງ ເຜີຍແຜ່ນະໂຍບາຍ, ຝຶກອົບຮົມ ຍົກລະດັບທາງດ້ານວິຊາສະເພາະ ໃຫ້ແກ່ສະມາຊິກຕົນ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ລວມທັງຕົວເລກສະຖິຕິ ຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 112 (ໃໝ່) ສະພາສົ່ງເສີມຕະຫຼາດການທ່ອງທ່ຽວລາວ**

ສະພາສົ່ງເສີມຕະຫຼາດການທ່ອງທ່ຽວລາວ ແມ່ນ ອົງການຈັດຕັ້ງຮ່ວມລະຫວ່າງພາກທຸລະກິດ ແລະ ພາກລັດ ທີ່ໄດ້ຮັບການອະນຸຍາດສ້າງຕັ້ງຂຶ້ນໂດຍລັດຖະບານ, ມີພາລະບົດບາດໃນການສົ່ງເສີມການດຳເນີນທຸລະກິດ

ແລະ ການບໍລິການ, ຄົ້ນຄວ້າ ແລະ ນຳສະເໜີ ນະໂຍບາຍ, ແຜນຍຸດທະສາດ, ໂຄສະນາ ກ່ຽວກັບວຽກງານຕະຫຼາດການທ່ອງທ່ຽວລາວ ເພື່ອສ້າງໂອກາດໃຫ້ການຕະຫຼາດໃໝ່ ມີຄຸນນະພາບ, ມີມູນຄ່າສູງ, ມີເອກະລັກ, ມີຄວາມປອດໄພ, ທັນສະໄໝ, ໄດ້ມາດຕະຖານ, ມີຄວາມຍືນຍົງ ສາມາດດຶງດູດເອົາ ນັກທ່ອງທ່ຽວ, ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.

ການຈັດຕັ້ງ, ການເຄື່ອນໄຫວ, ສິດ ແລະ ໜ້າທີ່ ຂອງສະພາສົ່ງເສີມຕະຫຼາດການທ່ອງທ່ຽວລາວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ IX
# ຂໍ້ຫ້າມ

### ມາດຕາ 113 (ປັບປຸງ) ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ທຳລາຍ ຊັບພະຍາກອນທ່ອງທ່ຽວ, ແຫຼ່ງທ່ອງທ່ຽວ, ສະຖານທີ່ທ່ອງທ່ຽວ, ຄວາມສວຍງາມຂອງສິ່ງແວດລ້ອມ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ທີ່ພົວພັນເຖິງການທ່ອງທ່ຽວ;
2. ສ້າງສິ່ງກີດຂວາງ, ສິ່ງສຽງລົບກວນ, ຈັດງານ, ຈັດກິດຈະກຳຕ່າງໆ ໃນສະຖານທີ່ທ່ອງທ່ຽວ ຫຼື ສະຖານທີ່ສາທາລະນະ ດ້ວຍຮູບແບບຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ;
3. ບຸກລຸກ, ຈັບຈອງ ຫຼື ປຸກສ້າງ ຢູ່ໃນເຂດຫວງຫ້າມ ຫຼື ເຂດຊັບພະຍາກອນທ່ອງທ່ຽວ ໂດຍບໍ່ໄດ້ຮັບອະນຸຍາດ;
4. ໃຫ້ຂໍ້ມູນ, ໂຄສະນາ ບິດເບືອນຄວາມຈິງ, ໃສ່ຮ້າຍປ້າຍສີ ບຸກຄົນອື່ນ ຫຼື ການຈັດຕັ້ງ;
5. ໃຫ້, ເປັນສື່ກາງ ໃນການຮັບ ຫຼື ໃຫ້ ສິນບົນ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 114 (ໃໝ່) ຂໍ້ຫ້າມສຳລັບນັກທ່ອງທ່ຽວ

ຫ້າມນັກທ່ອງທ່ຽວ ມີພຶດຕິກຳ ດັ່ງນີ້:

1. ບໍ່ເຄົາລົບ ແລະ ປະຕິບັດລະບຽບການຂອງສະຖານທີ່ທ່ອງທ່ຽວ;
2. ໄປທ່ອງທ່ຽວໃນສະຖານທີ່ເກືອດຫ້າມ;
3. ແຕ່ງກາຍ, ນຸ່ງຖື ແລະ ມີພຶດຕິກຳ ບໍ່ສຸພາບຮຽບຮ້ອຍ ຢູ່ ສະຖານທີ່ສັກສິດ, ວັດ, ສາສະໜາ ສະຖານທີ່ທ່ອງທ່ຽວປະຫວັດສາດ, ສະຖານບູຮານ ແລະ ສະຖານທີ່ອື່ນ;
4. ສວຍໃຊ້ການທ່ອງທ່ຽວເພື່ອ ຄ້າມະນຸດ, ຄ້າປະເວນີຂອງບຸກຄົນອື່ນ, ຂູດຮີດທາງເພດ, ມົ້ວສຸມທາງເພດ, ລ່ວງລະເມີດທາງເພດເດັກ, ຂູດຮີດແຮງງານ, ໃຊ້ແຮງງານເດັກ, ຫຼິ້ນການພະນັນທີ່ຕ້ອງຫ້າມ, ຄ້າຂາຍ, ເສບ ຫຼື ຈຳໜ່າຍ ຢາເສບຕິດ ແລະ ສານເສບຕິດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 115 (ປັບປຸງ) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດການທ່ອງທ່ຽວ

ຫ້າມຜູ້ດຳເນີນທຸລະກິດການທ່ອງທ່ຽວ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດການທ່ອງທ່ຽວ ທີ່ບໍ່ໄດ້ຮັບອະນຸຍາດ;
2. ດຳເນີນທຸລະກິດ ແລະ ໃຫ້ການບໍລິການ ການທ່ອງທ່ຽວ ທີ່ບໍ່ສອດຄ່ອງກັບແຜນພັດທະນາການທ່ອງທ່ຽວ ຫຼື ກໍ່ຄວາມເສຍຫາຍແກ່ ແຫຼ່ງທ່ອງທ່ຽວ, ສະຖານທີ່ທ່ອງທ່ຽວ, ສິ່ງແວດລ້ອມ ຫຼື ທັດສະນີຍະພາບ;
3. ໃຫ້ບໍລິການ ຫຼື ນຳພານັກທ່ອງທ່ຽວ ໄປທ່ຽວໃນສະຖານທີ່ເກືອດຫ້າມ;
4. ສະແຫວງຫາຜົນປະໂຫຍດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຈາກນັກທ່ອງທ່ຽວ;

5. ສວຍໃຊ້ການດຳເນີນທຸລະກິດ ເພື່ອ ຄ້າມະນຸດ, ຄ້າປະເວນີຂອງບຸກຄົນອື່ນ, ຊູດຣີດທາງເພດ, ມົ້ວສຸມທາງເພດ, ລ່ວງລະເມີດທາງເພດເດັກ, ຊູດຣີດແຮງງານ, ໃຊ້ແຮງງານເດັກ, ຫຼິ້ນການພະນັນທີ່ຕ້ອງຫ້າມ, ຄ້າຂາຍ, ເສບ ຫຼື ຈຳໜ່າຍ ຢາເສບຕິດ ແລະ ສານເສບຕິດ;

6. ໂອນ ຫຼື ໃຫ້ຜູ້ອື່ນເຊົ່າ ໃບອະນຸຍາດດຳເນີນທຸລະກິດການທ່ອງທ່ຽວ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 116 (ໃໝ່) ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ຕຳແໜ່ງ ເພື່ອນາບຂູ່ ຮຽກຮ້ອງເອົາຜົນປະໂຫຍດໂດຍທາງກົງ ແລະ ທາງອ້ອມ ຈາກຜູ້ດຳເນີນທຸລະກິດການທ່ອງທ່ຽວ, ນັກທ່ອງທ່ຽວ ແລະ ຜູ້ມີສ່ວນກ່ຽວຂ້ອງກັບທຸລະກິດການທ່ອງທ່ຽວ;

2. ສົມຮູ້ຮ່ວມຄິດກັບຜູ້ດຳເນີນທຸລະກິດການທ່ອງທ່ຽວ, ຜູ້ພັດທະນາແຫຼ່ງທ່ອງທ່ຽວເປັນສະຖານທີ່ທ່ອງທ່ຽວ, ນັກທ່ອງທ່ຽວ ແລະ ຜູ້ມີສ່ວນກ່ຽວຂ້ອງກັບທຸລະກິດການທ່ອງທ່ຽວ ເພື່ອຫາຜົນປະໂຫຍດແກ່ຕົນ, ຍາດພີ່ນ້ອງ ຫຼື ພັກພວກຂອງຕົນ;

3. ກົດໜ່ວງ ຖ່ວງດຶງ, ແກ່ຍາວເວລາ, ເມີນເສີຍ ຕໍ່ການປະຕິບັດໜ້າທີ່;

4. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ; ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;

5. ຮັບ, ຮຽກ, ທວງເອົາ ສິນບົນ ຫຼື ຜົນປະໂຫຍດອື່ນທີ່ບໍ່ຖືກຕ້ອງ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ X
# ການຄຸ້ມຄອງ ແລະ ການກວດກາ ວຽກງານທ່ອງທ່ຽວ
## ໝວດທີ 1
## ການຄຸ້ມຄອງວຽກງານທ່ອງທ່ຽວ

**ມາດຕາ 117 ອົງການຄຸ້ມຄອງວຽກງານທ່ອງທ່ຽວ**

ລັດຖະບານ ຄຸ້ມຄອງວຽກງານທ່ອງທ່ຽວ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານທ່ອງທ່ຽວ ປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ;
4. ອົງການປົກຄອງບ້ານ.

**ມາດຕາ 118 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານທ່ອງທ່ຽວ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານທ່ອງທ່ຽວ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານທ່ອງທ່ຽວ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທ່ອງທ່ຽວ;

4. ຄົ້ນຄວ້າ ສ້າງ ແລະ ຮັບຮອງ ແຜນພັດທະນາການທ່ອງທ່ຽວແຫ່ງຊາດ ແລະ ແຜນພັດທະນາການທ່ອງທ່ຽວລະດັບພາກ;

5. ຊີ້ນໍາ, ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທ່ອງທ່ຽວ;

6. ກໍານົດມາດຕະຖານການທ່ອງທ່ຽວ, ນໍາພາ ຊີ້ນໍາ ການຈັດລະດັບ ມາດຕະຖານການທ່ອງທ່ຽວ ເພື່ອເຮັດໃຫ້ການດໍາເນີນທຸລະກິດການທ່ອງທ່ຽວ ມີຄຸນນະພາບ, ໄດ້ມາດຕະຖານ ແລະ ຖືກຕ້ອງຕາມກົດໝາຍ;

7. ຄົ້ນຄວ້າ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດໍາເນີນທຸລະກິດການທ່ອງທ່ຽວ ໂດຍມີການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

8. ບໍາລຸງສ້າງ, ຍົກລະດັບ, ຝຶກອົບຮົມ ບຸກຄະລາກອນ ທີ່ເຄື່ອນໄຫວວຽກງານທ່ອງທ່ຽວ;

9. ຄຸ້ມຄອງກອງທຶນການທ່ອງທ່ຽວ ຢ່າງມີແຜນການ, ມີປະສິດທິຜົນ, ສອດຄ່ອງກັບເປົ້າໝາຍການນໍາໃຊ້ກອງທຶນ;

10. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີກ່ຽວກັບວຽກງານທ່ອງທ່ຽວ ຕາມກົດໝາຍ;

11. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວ;

12. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານທ່ອງທ່ຽວ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 119 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານທ່ອງທ່ຽວ ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທ່ອງທ່ຽວ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທ່ອງທ່ຽວ;

3. ຄົ້ນຄວ້າ ສ້າງແຜນພັດທະນາການທ່ອງທ່ຽວລະດັບແຂວງ ເພື່ອນໍາສະເໜີອົງການປົກຄອງຂັ້ນແຂວງ ພິຈາລະນາ;

4. ຄົ້ນຄວ້າ ພິຈາລະນາ ອອກ, ໂຈະ ຫຼື ຖອນໃບອະນຸຍາດດໍາເນີນທຸລະກິດການທ່ອງທ່ຽວ ໂດຍມີການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ບໍາລຸງ ສ້າງ, ຈັດຕັ້ງຝຶກອົບຮົມ ບຸກຄະລາກອນ ກ່ຽວກັບວຽກງານທ່ອງທ່ຽວ;

6. ຄຸ້ມຄອງກອງທຶນການທ່ອງທ່ຽວ ຢ່າງມີແຜນການ, ມີປະສິດທິຜົນ, ສອດຄ່ອງກັບເປົ້າໝາຍການນໍາໃຊ້ກອງທຶນ;

7. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີກ່ຽວກັບວຽກງານທ່ອງທ່ຽວ ຕາມກົດໝາຍ;

8. ປະສານສົມທົບກັບ ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວ;

9. ພົວພັນກັບຕ່າງປະເທດ ກ່ຽວກັບວຽກງານທ່ອງທ່ຽວ ຕາມການມອບໝາຍຂອງຂັ້ນເທິງ;

10.ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວ ຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

11.ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 120 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານທ່ອງທ່ຽວ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທ່ອງທ່ຽວ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທ່ອງທ່ຽວ;

3. ຄົ້ນຄວ້າ ສ້າງແຜນພັດທະນາການທ່ອງທ່ຽວລະດັບເມືອງ ເພື່ອນຳສະເໜີອົງການປົກຄອງຂັ້ນແຂວງ ພິຈາລະນາ ພ້ອມທັງຄົ້ນຄວ້າ ສ້າງແຜນພັດທະນາການທ່ອງທ່ຽວລະດັບບ້ານ ແລ້ວນຳສະເໜີອົງການປົກຄອງຂັ້ນເມືອງ ພິຈາລະນາ;

4. ຄົ້ນຄວ້າ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດການທ່ອງທ່ຽວ ໂດຍມີການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ສະເໜີ ບຳລຸງ ສ້າງ, ຈັດຕັ້ງຝຶກອົບຮົມ ບຸກຄະລາກອນ ກ່ຽວກັບວຽກງານທ່ອງທ່ຽວ;

6. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີກ່ຽວກັບວຽກງານທ່ອງທ່ຽວ ຕາມກົດໝາຍ;

7. ປະສານສົມທົບກັບ ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວ ຕໍ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 121 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານທ່ອງທ່ຽວ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ຮ່ວມມື, ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ໃນການຄຸ້ມຄອງ, ຕິດຕາມ ກວດກາ, ພັດທະນາ ແລະ ສົ່ງເສີມວຽກງານທ່ອງທ່ຽວ ໃນຂອບເຂດບ້ານຂອງຕົນ.

**ມາດຕາ 122 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານທ່ອງທ່ຽວ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບ ກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຕົ້ນ ການປົກປັກຮັກສາ, ການອະນຸລັກ ແລະ ການບູລະນະ ແຫຼ່ງທ່ອງທ່ຽວ,

ສະຖານທີ່ທ່ອງທ່ຽວ, ການພັດທະນາ ແລະ ການໂຄສະນາສົ່ງເສີມ ການທ່ອງທ່ຽວ, ການຄຸ້ມຄອງ ລາຄາ ແລະ ຄ່າບໍລິການ ທ່ອງທ່ຽວ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານທ່ອງທ່ຽວ

**ມາດຕາ 123 (ປັບປຸງ) ອົງການກວດກາວຽກງານທ່ອງທ່ຽວ**

ອົງການກວດກາວຽກງານທ່ອງທ່ຽວ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານທ່ອງທ່ຽວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 117 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 124 (ປັບປຸງ) ເນື້ອໃນການກວດກາ**

ເນື້ອໃນການກວດກາ ມີ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທ່ອງທ່ຽວ;

2. ການດຳເນີນທຸລະກິດການທ່ອງທ່ຽວ ເປັນຕົ້ນ ການກວດກາເອກະສານ, ການລົງກວດກາການເຄື່ອນໄຫວຕົວຈິງຢູ່ກັບທີ່;

3. ການແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານທ່ອງທ່ຽວ;

4. ການປະຕິບັດມາດຕະການຕ່າງໆ ຕໍ່ຜູ້ລະເມີດກົດໝາຍ ກ່ຽວກັບວຽກງານທ່ອງທ່ຽວ ໂດຍມີການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 125 (ປັບປຸງ) ຮູບການການກວດກາ**

ຮູບການການກວດກາ ແບ່ງອອກເປັນ ສາມປະເພດ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນການກວດກາ ແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 126 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 127 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XII
## ບົດບັນຍັດສຸດທ້າຍ

### ມາດຕາ 128 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 129 ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 23 ກັນຍາ 2024 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ

ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ